ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-12 ສິງຫາ 2022
ປີທີ 11
ສະບັບທີ 866

## ຍົກສູງບົດບາດການເຄື່ອນໄຫວຂອງສະພາແຫ່ງຊາດ ໃຫ້ແກ່ກຳລັງປ້ອງກັນຄວາມສະຫງົບ



(ສພຊ) ກອງປະຊຸມຍົກສູງບົດບາດການເຄື່ອນໄຫວຂອງສະພາແຫ່ງຊາດ ໃຫ້ແກ່ກຳລັງປ້ອງກັນຄວາມສະຫງົບ (ປກສ) ໄດ້ຈັດຂຶ້ນໃນວັນທີ 8 ສິງຫາ 2022 ໂດຍການເປັນປະທານຮ່ວມຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ແລະ ທ່ານ ພົຕ. ວັນທອງ ກອງມະນີ ຮອງລັດຖະມົນຕີ, ຫົວໜ້າກົມໃຫຍ່ການເມືອງ ກະຊວງປ້ອງກັນຄວາມສະຫງົບ, ມີປະທານ-ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ, ນາຍ ແລະ ພົນຕຳຫລວດ ພ້ອມດ້ວຍພະນັກງານຫລັກແຫລ່ງຈາກກະຊວງປ້ອງກັນຄວາມສະຫງົບ ເຂົ້າຮ່ວມ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການເຜີຍແຜ່ເອກະສານສຳຄັນຕ່າງໆ ຄື: ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 9 ທັນວາ 2015 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ທີ່ພົວພັນເຖິງພາລະບົດບາດ, ສິດ, ໜ້າທີ່ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ; ມະຕິຂອງສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະບັບເລກທີ 169/ຄປຈ, ລົງວັນທີ 5 ກໍລະກົດ 2021; ນະໂຍບາຍຕໍ່ພະນັກງານ-ນັກຮົບໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະຕິບັດໜ້າທີ່ຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 163/ຄປຈ, ລົງວັນທີ 2 ມິຖຸນາ 2022; ຂໍ້ຕົກລົງຮ່ວມວ່າດ້ວຍການປະສານງານລະຫວ່າງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ຊຸດທີ IX ແລະ ຄະນະປະສານງານຂອງກະຊວງປ້ອງກັນປະເທດ ສະບັບເລກທີ 01/ປກຊ ສ-ຄ.ປກທ, ລົງວັນທີ 9 ກຸມພາ 2022; ບົດສະຫລຸບຕີລາຄາ ໂດຍ

ອ່ານຕໍ່ໜ້າ 2

## ນ້ຳໃຈວັນສື່ມວນຊົນ ໝັ້ນຍືນ!

ວັນທີ 13 ສິງຫາ ຖືກກຳນົດໃຫ້ເປັນວັນສື່ມວນຊົນ ແລະ ການພິມຈຳໜ່າຍ ຕາມກົດໝາຍສື່ມວນຊົນ ເຊິ່ງຖືເປັນຄວາມພາກພູມໃຈຂອງຜູ້ເຮັດໜ້າທີ່ດ້ານສື່ມວນຊົນຂອງປະເທດເຮົາ ເຊິ່ງປີນີ້ແມ່ນ ຄົບຮອບ 72 ປີພໍດີ.

ສື່ມວນຊົນຂອງສະພາແຫ່ງຊາດ ກໍແມ່ນໜຶ່ງໃນວົງການສື່ມວນຊົນລາວ ເຊິ່ງປະກອບມີຜະລິດຕະພັນທີ່ຫລາກຫລາຍ ເຊັ່ນ: ໜັງສືພິມ "ຜູ້ແທນປະຊາຊົນ, ລາຍການວິທະຍຸ ແລະ ໂທລະພາບ ຜູ້ແທນປະຊາຊົນ, ເວັບໄຊ, ສື່ສັງຄົມອອນລາຍ, ຢູທູບ ແລະ ເອັບພິເຄຊັນ" ໃນໄລຍະຜ່ານມາ, ສື່ມວນຊົນສະພາແຫ່ງຊາດ ໄດ້ສ້າງຜົນງານທີ່ພົ້ນເດັ່ນໃນຫລາຍດ້ານ ເຂົ້າໃນແຕ່ລະສີ່ຕ່າງໆຂອງສະພາແຫ່ງຊາດ ທັງນີ້ກໍເພື່ອເປັນຊ່ອງທາງໃນການໂຄສະນາເຜີຍແຜ່ບັນດານິຕິກຳ, ກົດໝາຍ, ລະບຽບການຕ່າງໆ ແລະ ເປັນກະບອກສຽງ ເພື່ອໃຫ້ສັງຄົມໄດ້ຮັບຮູ້ ແລະ ເຂົ້າໃຈເຖິງສິດ, ໜ້າທີ່ ແລະ ພາລະບົດບາດ ຂອງສະພາແຫ່ງຊາດ ແລະ ການເຄື່ອນໄຫວຂອງບັນດາການນຳຂອງສະພາແຫ່ງຊາດ ກໍຄືບັນດາສະມາຊິກສະພາແຫ່ງຊາດ ໃນທົ່ວປະເທດ.

ສ່ວນທິດທາງໃນຕໍ່ໜ້າ ສື່ມວນຊົນຂອງສະພາແຫ່ງຊາດພວກເຮົາ ໄດ້ມີແຜນດຳເນີນງານ ເພື່ອໃຫ້ສື່ຂອງສະພາແຫ່ງຊາດ ເປັນທີ່ຮູ້ຈັກ

ອ່ານຕໍ່ໜ້າ 3

## ຮຽບຮຽງກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສານປະຊາຊົນ


ໜ້າ 3

## ລະດົມແນວຄິດໃສ່ຮ່າງຄູ່ມືການຕິດຕາມກວດກາ

(ສພຊ) ການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເປັນວຽກງານໜຶ່ງທີ່ມີຄວາມໝາຍ,ຄວາມສຳຄັນ ທີ່ຈະຕ້ອງໄດ້ດຳເນີນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນທຸກຂົງເຂດວຽກງານ ເພື່ອຕິດຕາມກວດກາ, ຕີລາຄາ ແລະ ປະເມີນປະສິດທິພາບ, ປະສິດທິຜົນ ການຈັດຕັ້ງປະຕິບັດກົດໝາຍ ທີ່ຍັງບໍ່ທັນແທດເໝາະກັບສະພາບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ແລະ ຍັງບໍ່ທັນສອດຄ່ອງກັບລັດຖະທຳມະນູນ, ກົດໝາຍອື່ນ ທີ່ເຫັນວ່າເປັນຊ່ອງວ່າງ, ມີຜົນກະທົບ ແລະ ບໍ່ສາມາດຈັດຕັ້ງປະຕິບັດກົດໝາຍສະບັບດັ່ງກ່າວໄດ້.

ໃນລະຫວ່າງວັນທີ 4-5 ສິງຫາ 2022 ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມເປີດກວ້າງລະດົມແນວຄິດໃສ່ຮ່າງຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂຶ້ນ ທີ່ເມືອງວັງວຽງ ແຂວງວຽງຈັນ ພາຍໃຕ້ການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກຳມາທິການກົດໝາຍ ໂດຍມີບັນດາຮອງປະທານກຳມາທິການ, ຫົວໜ້າກົມ, ຮອງຫົວໜ້າກົມ ຈາກສະພາແຫ່ງຊາດ, ກະຊວງຍຸຕິທຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງເຂົ້າຮ່ວມ.

ທັງນີ້ ເພື່ອຄົ້ນຄວ້າ, ປະກອບຄຳເຫັນໃສ່ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການ

ອ່ານຕໍ່ໜ້າ 3

## ສພຂ ໄຊຍະບູລີ ພິຈາລະນາ ຫລາຍບັນຫາສຳຄັນຂອງແຂວງ



ໜ້າ 3

## ສພຊ ໄດ້ຮັບການຊ່ວຍເຫລືອອຸປະກອນຫ້ອງການ


ໜ້າ 2

## ກອງປະຊຸມ ສພຂ ອຸດົມໄຊ ພິຈາລະນາຫລາຍບັນຫາສຳຄັນ

(ສພຊ) ໃນຕອນເຊົ້າຂອງວັນອັງຄານ ວັນທີ 9 ສິງຫາ 2022 ທີ່ສະໂມສອນແຂວງອຸດົມໄຊ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ຊຸດທີ II ໄດ້ໄຂຂຶ້ນຢ່າງເປັນທາງການ ໂດຍພາຍໃຕ້ການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ຮອງເລຂາຄະ

ອ່ານຕໍ່ໜ້າ 3




ໜ້າ 4


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5

ຊົມເຊີຍວັນສື່ມວນຊົນ ແລະ ການພິມຈຳໜ່າຍ ຄົບຮອບ 72 ປີ (13/8/1950-13/8/2022) ຢ່າງສຸດໃຈ!

## ຍົກສູງ...

ສັງເຂບ ຜ່ານການເຄື່ອນໄຫວຈັດຕັ້ງການປະສານງານ ໄລຍະ 5 ປີຜ່ານມາ (2016-2020) ແລະ ກຳນົດທິດທາງແຜນການ 5 ປີ (2021-2025) ລະຫວ່າງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ຊຸດທີ IX ກັບກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດ ສະບັບເລກທີ 02/ຄປຈ, ລົງວັນທີ 10 ກຸມພາ 2022. ພາຍຫລັງຮັບຟັງການເຜີຍແຜ່, ບັນດາຜູ້ແທນກອງປະຊຸມ ກໍໄດ້ປະກອບຄຳເຫັນ, ຊັກຖາມຕໍ່ບັນຫາທີ່ມີຄວາມສົນໃຈ.

ໃນຕອນບ່າຍ, ກອງປະຊຸມໄດ້ຕ້ອນຮັບ ແລະ ເປັນປະທານກອງປະຊຸມໂດຍທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ມີທ່ານ ພົອ. ວິໄລ ຫລ້າຄຳຟອງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍພະນັກງານຫລັກແຫລ່ງຈາກກະຊວງປ້ອງກັນຄວາມສະຫງົບ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການໂອ້ລົມຈາກທ່ານ ປອ. ໄຊສົມພອນ ພົມວິຫານ ເຊິ່ງມີເນື້ອໃນບາງຕອນສຳຄັນວ່າ: ໃນໄລຍະຜ່ານມາ ເຖິງແມ່ນວ່າສະພາບການສາກົນ ແລະ ພາກພື້ນ ໄດ້ມີການຜັນແປໄປຢ່າງສະຫລັບສັບຊ້ອນ, ໄວວາ, ຍາກທີ່ຈະຄາດຄະເນໄດ້ນັ້ນ. ສະພາບຢູ່ພາຍໃນປະເທດພວກເຮົາກໍມີຄວາມຫຍຸ້ງຍາກຫລາຍປະການ, ແຕ່ກຳລັງປ້ອງກັນຄວາມສະຫງົບປະຊາຊົນພວກເຮົາ ໄດ້ປະກອບສ່ວນອັນສຳຄັນ ແລະ ສົມກຽດໃນການປະຕິບັດສອງໜ້າທີ່ຍຸດທະສາດ, ຮັບປະກັນໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບ ແລະ ຄວາມໝັ້ນຄົງທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ, ປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ສາມາດສະກັດກັ້ນ ແລະ ຕີຖອຍທຸກແຜນການທຳລາຍມ້າງເພ ກໍຄືຍຸດທະສາດ "ຫັນປ່ຽນໂດຍສັນຕິ" ຂອງບັນດາອິດທິກຳລັງປໍລະປັກ ແລະ ພວກຄົນບໍ່ດີໄດ້ຢ່າງທັນການ, ການຫັນກຳລັງລົງກໍ່ສ້າງຮາກຖານການເມືອງຢ່າງຕັ້ງໜ້າຂອງກຳລັງປ້ອງກັນຄວາມສະຫງົບ ສາມາດຍາດໄດ້ຜົນງານ ແລະ ຜົນສຳເລັດທີ່ສຳຄັນຫລາຍດ້ານ ໂດຍຖືເອົາວຽກງານກໍ່ສ້າງຮາກຖານການເມືອງຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການອັດເສັ້ນທາງຂ້າມລອຍຂອງຢາເສບຕິດ, ການແກ້ໄຂອາດຊະຍາກຳຂ້າມຊາດທຸກຮູບແບບ, ການແກ້ໄຂບັນດາປາກົດການຫຍໍ້ທໍ້ຢູ່ຮາກຖານ ຕິດພັນກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ອັນໄດ້ເຮັດໃຫ້ຮາກຖານມີຄວາມສະຫງົບ, ເຂັ້ມແຂງ ທັງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຜະລິດ, ການດຳລົງຊີວິດ, ການໄປມາຫາສູ່ ແລະ ການສ້າງສາພັດທະນາເສດຖະກິດ-ສັງຄົມ ຂອງປະຊາຊົນຢູ່ທ້ອງຖິ່ນຕ່າງໆ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ. ອັນພິເສດ ແລະ ພົ້ນ




ເດັ່ນກຳລັງປ້ອງກັນຄວາມສະຫງົບປະຊາຊົນພວກເຮົາ ແມ່ນເປັນກຳລັງຫລັກແຫລ່ງ ແລະ ເປັນເສນາທິການໃຫ້ແກ່ລັດຖະບານ ກໍຄືອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມຄຳສັ່ງຂອງກົມການເມືອງສູນກາງພັກ ສະບັບເລກທີ02/ກມສພ, ລົງວັນທີ 26 ກໍລະກົດ 2021, ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021, ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 19/ນຍ, ລົງວັນທີ 04 ຕຸລາ 2021 ເຂົ້າສູ່ການກະທຳຕົວຈິງ ຕາມແຜນການ 6 ວຽກຈຸດສຸມຂອງວາລະແຫ່ງຊາດ; ພ້ອມນັ້ນ, ທ່ານປະທານສະພາແຫ່ງຊາດ ຍັງໄດ້ເນັ້ນໜັກ 8 ບັນຫາສຳຄັນໃຫ້ພະນັກງານຫລັກແຫລ່ງກະຊວງ ປກສ ເອົາໃຈໃສ່ ຄື:

1. ສືບຕໍ່ເຝິກຝົນທາດແທ້ປະຕິວັດ, ຄວາມຈົ່ງຮັກພັກດີ ຕໍ່ປະເທດຊາດ, ຍອມເສຍສະຫລະ ເພື່ອຊາດ ເພື່ອປະຊາຊົນ ຂອງນາຍ ແລະ ພົນຕຳຫລວດໃຫ້ຖືເປັນບັນຫາສຳຄັນໃຈກາງ ແລະ ບໍ່ສາມາດຖືເບົາໄດ້;

2. ສ້າງຄວາມເປັນເອກະພາບສູງ ກັບແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດຢ່າງໜັກແໜ້ນພາຍໃນຖັນແຖວກຳລັງປ້ອງກັນຄວາມສະຫງົບ ກໍຄືກຳລັງປະກອບອາວຸດປະຊາຊົນ ເປັນກຳລັງແຖວໜ້າໃນການກຳແໜ້ນແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ໂດຍສະເພາະກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍຢາເສບຕິດ ແລະ ອື່ນໆ ເພື່ອຈັດຕັ້ງຜັນຂະຫຍາຍອອກມາເປັນແຜນການອັນລະອຽດ ຂອງກຳລັງ ປກສ, ທັງເປັນແບບຢ່າງທີ່ດີໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ກໍຄືກົດໝາຍຕໍ່ປະຊາຊົນ.

3. ນາຍ ແລະ ພົນຕຳຫລວດໃນກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຕ້ອງສືບຕໍ່ເຝິກຝົນຫລໍ່ຫລອມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມຈົ່ງຮັກພັກດີຕໍ່ພັກ, ຕໍ່ຜົນປະໂຫຍດລວມຂອງຊາດ ແລະ ປະຊາຊົນ; ຄວາມມີລະບຽບວິໄນ, ຖືສິ່ງນີ້ທັງເປັນທາດແທ້, ເປັນຊີວິດຈິດໃຈຂອງຕົນ, ທັງເປັນຄຸນລັກສະນະທີ່ຂາດບໍ່ໄດ້ ເພື່ອເປັນອາວຸດ ອັນແຫລມຄົມ ຕັດສິນໄຊຊະນະ ຫລື ປະລາໄຊ ໃນການຕ້ານກຸ່ມຄົນບໍ່ດີທີ່ຫວັງມ້າງເພທຳລາຍລະບອບໃໝ່, ກໍ່ຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມເຮົາ; ລະບຽບວິໄນຕິດພັນກັບຈັນຍາບັນ ຂອງກຳລັງປ້ອງກັນຄວາມສະຫງົບປະຕິວັດ ບໍ່ຄວນອະນຸຍາດໃຫ້ໃຜອອກຈາກກອບຂອງລະບຽບ, ກົດໝາຍ, ກົດຄຳສັ່ງຢ່າງເດັດຂາດ, ລະບຽບວິໄນຂອງຕຳຫລວດປະຊາຊົນຕ້ອງໄດ້ຮັບການຈັດຕັ້ງປະຕິບັດຢ່າງເຄັ່ງຄັດ, ເດັດຂາດ, ການບັງຄັບບັນຊາຕ້ອງເປັນລະບຽບເຫລັກ, ເຖິງເວລາຕ້ອງຍອມເສຍສະຫລະ ກະທັ້ງຮອດຊີວິດ ເພື່ອຊາດ, ເພື່ອປະຊາຊົນ, ກຽມພ້ອມຢູ່ທຸກເວລາ ເພື່ອປະຕິບັດໜ້າທີ່;

4. ໃນສະພາບເສດຖະກິດຂະຫຍາຍຕົວ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ອາດຊະຍາກຳປະເພດຕ່າງໆ ກໍມີການພັດທະນາດ້ວຍຫລາຍຮູບແບບ ລວມທັງການນຳໃຊ້ລະບົບເອເລັກໂຕຣນິກເຂົ້າໃນການກໍ່ອາດຊະຍາກຳ. ສະນັ້ນ, ກຳລັງປ້ອງກັນຄວາມສະຫງົບປະຊາຊົນເຮົາ ຕ້ອງເຝິກຝົນຫລໍ່ຫລອມດ້ານສິນລະປະຍຸດ, ຍຸດທະວິທີ ຢ່າງເປັນປະຈຳ (ຮູ້ສະພາບ, ກຳສະພາບ ໃຫ້ຊັດເຈນ, ມີຫລັກວິຊາສະເພາະ ແລະ ຕົວຈິງ) ກຳສະພາບໄດ້ດີເທົ່າໃດ, ກຳຂ່າວໄດ້ແໜ້ນເທົ່າໃດ ຈຶ່ງສາມາດເອົາຊະນະກັບສັດຕູໄດ້ (ຮູ້ເຂົາ ຮູ້ເຮົາ ຮົບຮ້ອຍຄັ້ງ ກໍ່ຊະນະຮ້ອຍຄັ້ງ...);

ນອກຈາກກຳສະພາບ, ສັດຕູໄດ້ ເຮົາຕ້ອງກຳກຳລັງຂອງພວກເຮົາໃຫ້ໄດ້, ກຳແໜ້ນຄົນ, ກຳລັງດ້ານເຕັກນິກ, ພະລາທິການ, ກຳປະຊາຊົນ, ກຳຄວາມສາມາດຕົວຈິງ ຂອງພວກເຮົາ ອັນໃດພຽງພໍແລ້ວ, ອັນໃດຄວນພັດທະນາເພີ່ມ ໃຫ້ມີການຄິດໄລ່ຢ່າງຊັດເຈນ;

5. ໃນສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ບັນຫາຢາເສບຕິດໄດ້ແຜ່ລະບາດເຮັດໃຫ້ປາກົດການຍໍ້ທໍ້ໃນສັງຄົມ ມີທ່າອ່ຽງເພີ່ມຂຶ້ນ, ສະນັ້ນ, ມີຄວາມຈຳເປັນຕ້ອງໄດ້ພັດທະນາກຳລັງປ້ອງກັນຄວາມສະຫງົບປະຊາຊົນເຮົາໃຫ້ເຂັ້ມແຂງ, ມີແບບແຜນ, ມີຈັນຍາບັນ ແລະທັນສະໄໝເປັນກ້າວໆ, ຢູ່ຈຸດໃດ, ຂົງເຂດໃດ, ກຳລັງປະເພດໃດ ທີ່ຕ້ອງເນັ້ນໜັກການພັດທະນາ, ເນັ້ນໜັກການປັບປຸງເນັ້ນໜັກການນຳໃຊ້... ກຳລັງໃດ, ເຫລົ່າວິຊາສະເພາະໃດທີ່ຕ້ອງສ້າງ, ປັບປຸງໃນສະເພາະໜ້າ ແລະ ກຳລັງປະເພດໃດ ຕ້ອງພັດທະນາໄລຍະຍາວ ເຊິ່ງຕ້ອງຮູ້ວ່າມັນຂຶ້ນຢູ່ກັບສະຖານະການຈະຜັນແປນັ້ນ ໃຫ້ຊັດເຈນ ແລະ ໜັກແໜ້ນ, ບໍ່ໃຫ້ຜິດພາດ, ແຕ່ກໍບໍ່ຟຸມເຟືອຍ; ສະເໜີກຳລັງປ້ອງກັນຄວາມສະຫງົບ ຕ້ອງພຽບພ້ອມໄປດ້ວຍວິທະຍາສາດດ້ານສິນລະປະຍຸດ, ຍຸດທະວິທີໃນການຕໍ່ສູ້ (ເຄີຍເວົ້າວ່າ: ຫລີກບ່ອນແຂງ, ແທງໃສ່ບ່ອນອ່ອນ) ຢາກໃຫ້ເອົາໄປວິໄຈລອງເບິ່ງ, ຂະຫຍາຍເບິ່ງ, ຫລີກບ່ອນແຂງຂອງສັດຕູ ໃຫ້ແຕກທະລາຍແມ່ນແນວໃດ?, ແທງໃສ່ບ່ອນອ່ອນຂອງສັດຕູ ໃຫ້ຂາດເປັນປັ້ນ ເປັນທ່ອນ ແມ່ນແນວໃດ?.

ສະພາບປັດຈຸບັນນີ້ ແລະ ແງ່ການຂະຫຍາຍຕົວຂອງສະພາບໃນອະນາຄົດນັ້ນ ມັນບົ່ງບອກໃຫ້ພວກເຮົາ, ກຳລັງຕຳຫລວດເຮົາ ຕ້ອງໃຊ້ຮູບແບບນີ້ໃຫ້ຫລາຍຂຶ້ນ ເພາະຄົນຮ້າຍ ກໍຄືສັດຕູຂອງຊາດ ລ້ວນແລ້ວແຕ່ມີໄຫວພິບ ແລະ ປະກອບເຄື່ອງມື-ເຕັກນິກທີ່ທັນສະໄໝ.

6. ກຳລັງປ້ອງກັນຄວາມສະຫງົບປະຊາຊົນເຮົາ ຕ້ອງສືບຕໍ່ເອົາໃຈໃສ່ຊ່ວຍລັດຖະບານແກ້ໄຂບັນຫາເສດຖະກິດ, ຕ້ອງສ້າງຄວາມເຂັ້ມແຂງທາງດ້ານການສ້າງພະລາທິການກັບທີ່ເພື່ອຊ່ວຍຫລຸດຜ່ອນການແບກຫາບຂອງລັດຖະບານ ໃນບັນຫາຍຸດທະສາດໃຫຍ່ໆ ດຳເນີນການປະຢັດ, ການໃຊ້ຈ່າຍຢ່າງມີປະສິດທິຜົນ;

7. ກຳລັງປ້ອງກັນຄວາມສະຫງົບປະຊາຊົນເຮົາ ໃຫ້ສືບຕໍ່ຮັກສາມູນເຊື້ອອັນດີງາມໃນການຊ່ວຍເຫລືອປະຊາຊົນ, ເປັນທີ່ເພິ່ງຂອງປະຊາຊົນຢ່າງແທ້ຈິງ, ຮັບໃຊ້ປະຊາຊົນຢ່າງບໍ່ມີເງື່ອນໄຂ, ດັ່ງຄຳເວົ້າທີ່ວ່າ: "ຕື່ນເພື່ອໃຫ້ປະຊາຊົນໄດ້ນອນ, ເວນຍາມໃຫ້ປະຊາຊົນໄດ້ຫລິ້ນຢ່າງມ່ວນຊື່ນ, ເອົາຄວາມສຸກ, ຄວາມມ່ວນຂອງປະຊາຊົນມາເປັນຄວາມສຸກ, ຄວາມມ່ວນຂອງຕົນ" ແລະ ຄຳເວົ້າຂອງສະຫາຍເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ (ທ່ານ ທອງລຸນ ສີສຸລິດ) ເຄີຍກ່າວໄວ້ວ່າ: "ພະນັກງານ-ນັກຮົບປ້ອງກັນຄວາມສະຫງົບ. ນອກຈາກການປ້ອງກັນ ແລະ ປາບປາມອາຊະຍາກຳ ທີ່ເປັນໄພຄຸກຄາມຕໍ່ເສລີພາບທາງການເມືອງ ແລະ ຄວາມໝັ້ນຄົງແຫ່ງຊາດແລ້ວ, ການເສີມສ້າງຄວາມເຊື່ອໝັ້ນ ແລະ ສັດທາຂອງປະຊາຊົນລາວ ຕໍ່ກຳລັງປ້ອງກັນຄວາມສະຫງົບຢ່າງແທ້ຈິງນັ້ນ ກໍຖືເປັນພາລະກິດສຳຄັນ ທີ່ພະນັກງານ-ນັກຮົບປ້ອງກັນຄວາມສະຫງົບ ຕ້ອງຈັດຕັ້ງປະຕິບັດໃຫ້ໄດ້ຢ່າງເປັນຮູບປະທຳ ໂດຍຍຶດຖື ແລະ ຍຶດໝັ້ນໃນພາລະກິດປົກປັກຮັກສາຄວາມປອດໄພໃຫ້ແກ່ປະຊາຊົນບັນດາເຜົ່າໃນທົ່ວປະເທດ ທັງຈະຕ້ອງປະຕິບັດໜ້າທີ່ຢ່າງຊື່ສັດສຸດຈະລິດ ແລະ ບໍ່ຮັບສິນບົນຈາກຜູ້ທີ່ກະທຳຜິດອີກດ້ວຍ". ເຮັດໄດ້ຄືແນວນີ້ ຈຶ່ງຈະສ້າງໄດ້ຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນ ຕໍ່ກຳລັງປ້ອງກັນຄວາມສະຫງົບເຮົາ;

8. ກຳລັງປ້ອງກັນຄວາມສະຫງົບປະຊາຊົນເຮົາກັບກຳລັງປ້ອງກັນຄວາມສະຫງົບຂອງປະເທດເພື່ອນມິດຕ້ອງສືບຕໍ່ໃຫ້ຄວາມສຳຄັນ ກັບການພົວພັນທີ່ມີມູນເຊື້ອທັງຢູ່ໃກ້ ແລະ ໄກ ໂດຍສະເພາະເພື່ອນມິດຍຸດທະສາດ, ຮູ້ຍາດແຍ່ງ, ຮູ້ຮໍ່າຮຽນ ແລະ ຮູ້ຮັບເອົາການຮ່ວມມືຊ່ວຍເຫລືອຢ່າງມີການເລືອກເຟັ້ນ ດ້ວຍສະຕິປັນຍາທີ່ແຫລມຄົມ.

(ກົງທະນູຄຳ ພິພັດເສລີ)

## ສພຊ...

(ສພຊ) ວັນທີ 8 ສິງຫາ 2022 ໄດ້ມີພິທີມອບ-ຮັບ ເຄື່ອງຊ່ວຍເຫລືອຊຸດອຸປະກອນຫ້ອງປະຊຸມຈາກບໍລິສັດ ອຸດສາຫະກຳ ຈິ່ງຈູ້ ລາວ ມອບໃຫ້ແກ່ສະພາແຫ່ງຊາດ (ສພຊ) ເພື່ອມອບຕໍ່ໃຫ້ສະພາປະຊາຊົນແຂວງສາລະວັນ ເຊິ່ງອຸປະກອນທີ່ນຳມາມອບຄັ້ງນີ້ປະກອບມີ: ເຄື່ອງແມ່ລະບົບໄມ 1 ໜ່ວຍ, ໄມສຳລັບປະທານ 1 ອັນ, ໄມສຳລັບຜູ້ເຂົ້າຮ່ວມ 40 ອັນ ແລະ ສາຍຕໍ່ 3 ກໍ້ ລວມມູນຄ່າ 7.000 ໂດລາ ຫລື ປະມານ 107 ລ້ານກວ່າກີບ; ຕາງໜ້າມອບໂດຍແມ່ນທ່ານ ຢາງ ຊີງ ຫລົງ ປະທານບໍລິສັດ ອຸດສາຫະກຳ ຈິ່ງຈູ້ ລາວ ຈຳກັດ ແລະ ຕາງໜ້າຮັບໂດຍທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມເປັນສັກຂີພິຍານ.

ໂອກາດດັ່ງກ່າວ, ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ທ່ານ ນາງ ປິ່ງຄຳ ລາຊະສິມມາ ຍັງໄດ້ມອບໃບຍ້ອງຍໍໃຫ້ທ່ານ ຢາງ ຊີງ ຫລົງ ເນື່ອງຈາກມີຜົນງານດີເດັ່ນ ໃນການປະກອບສ່ວນຊ່ວຍເຫລືອຊຸດອຸປະກອນຫ້ອງປະຊຸມໃນຄັ້ງນີ້.

ພ້ອມດຽວກັນນັ້ນ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ກໍໄດ້ມອບຕໍ່ອຸປະກອນດັ່ງກ່າວ ໃຫ້ສະພາປະຊາຊົນແຂວງສາລະວັນ ເຊິ່ງຕາງໜ້າຮັບໂດຍທ່ານ ສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງສາລະວັນ ເພື່ອນຳເອົາອຸປະກອບທີ່ໄດ້ຮັບການຊ່ວຍເຫລືອຄັ້ງນີ້ ປະກອບເຂົ້າໃນຫ້ອງປະຊຸມຮັບໃຊ້ໃຫ້ແກ່ວຽກງານຂອງສະພາປະຊາຊົນແຂວງ ໃຫ້ເກີດປະໂຫຍດສູງສຸດ.

(ນາງ ປາກາລັກ ພົມມີໄຊ)

## ເລື່ອງເດັ່ນ, ຂ່າວເດັດ

# ຄັດໂດຍ: ຫອມສະນິດ

❑ ເນື່ອງໃນໂອກາດສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ 2022 ແລະ ວັນສ້າງຕັ້ງແນວລາວສ້າງຊາດ ຄົບຮອບ 72 ປີ, ວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 31 ປີ, ສູນກາງແນວລາວສ້າງຊາດຮ່ວມກັບສະມາຄົມໃຫຍ່ຊາວຫວຽດນາມ ໄດ້ຈັດງານວາງສະແດງສິນຄ້າລາວ ແລະ ຫວຽດນາມ ເຊິ່ງຈະໄດ້ຈັດຂຶ້ນໃນລະຫວ່າງວັນທີ 11-13 ສິງຫາ 2022, ທີ່ສູນກາງແນວລາວສ້າງຊາດ, ພາຍໃນງານມີອາຫານ-ເຄື່ອງດື່ມ ເຊິ່ງມີຫລາຍພາກສ່ວນເຂົ້າຮ່ວມວາງສະແດງສິນຄ້າຄັ້ງນີ້ ໂດຍເນັ້ນໃສ່ເຄື່ອງຫັດຖະກຳ, ກະສິກຳ, ອາຫານ-ເຄື່ອງດື່ມ, ຮູບພາບການພົວພັນຮ່ວມມືລາວ-ຫວຽດນາມ. ພິເສດ, ຈະມີການປະກວດອາຫານແຊບ ໃນວັນທີ 13 ສິງຫາ 2022 ເລີ່ມແຕ່ 9:00-11:00 ໂມງ. ພາຍໃນງານຈະມີກິດຈະກຳຖາມ-ຕອບຄວາມຮູ້ກ່ຽວກັບຄວາມສາມັກຄີມິດຕະພາບລາວ-ຫວຽດນາມ, ຄວາມຮູ້ກ່ຽວກັບແນວລາວສ້າງຊາດ ແລະ ຄວາມຮູ້ຮອບຕົວ.

**ນສພ. ປະຊາຊົນ 09/08/2022**

❑ ຕາມຂໍ້ມູນຂ່າວສານ ກະຊວງອຸດສາຫະກຳ ແລະ ການຄ້າໃຫ້ຮູ້ວ່າ: ມູນຄ່າການນຳເຂົ້າ ແລະ ສົ່ງອອກຂອງ ສປປລາວ ປະຈຳເດືອນ 6 ປີ 2022 ບັນລຸໄດ້ປະມານ 1.000 ລ້ານໂດລາ. ໃນນັ້ນ, ມູນຄ່າການສົ່ງອອກ ມີປະມານ 456 ລ້ານໂດລາ ສິນຄ້າສົ່ງອອກຫລັກປະກອບມີ: ຄຳປະສົມ, ຄຳແທ່ງ, ເຈ້ຍ ແລະ ເຄື່ອງທີ່ເຮັດດ້ວຍເຈ້ຍ, ແຮ່ທອງ, ຢາງພາລາ, ແຮ່ເຫລັກ, ໝາກກ້ວຍ ແລະອື່ນໆ; ມູນຄ່າການນຳເຂົ້າ ມີປະມານ 589 ລ້ານໂດລາ ປະກອບມີ: ພາຫະນະທາງບົກ, ນ້ຳມັນກາຊວນ, ອຸປະກອນກົນຈັກ, ເຫລັກ ແລະ ເຄື່ອງທີ່ເຮັດດ້ວຍເຫລັກ ແລະ ອື່ນໆ; ສຳລັບການຂາດດຸນການຄ້າປະມານ 133 ລ້ານໂດລາ (ມູນຄ່າການນຳເຂົ້າ ແລະ ສົ່ງອອກຂອງ ສປປລາວ ປະຈຳເດືອນ 6 ປີ 2022 ແມ່ນຍັງບໍ່ກວມເອົາມູນຄ່າການສົ່ງອອກໄຟຟ້າ).

**ນສພ. ປະເທດລາວ 09/08/2022**

❑ ໃນ 6 ເດືອນຕົ້ນປີ 2022 ມີນັກທ່ອງທ່ຽວເຂົ້າມາທ່ຽວໃນນະຄອນຫລວງວຽງຈັນ 75.610 ຄົນ ທຽບໃສ່ຕົວເລກຄາດໝາຍປີ 2022 ປະຕິບັດໄດ້ 25,2% ຂອງແຜນການ ແລະ ສຳລັບ 6 ເດືອນທ້າຍປີ 2022 ແມ່ນຈະຊຸກຍູ້ສົ່ງເສີມວຽກງານການທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ດ້ວຍການຟື້ນຟູ ແລະ ສ້າງເສດຖະກິດການທ່ອງທ່ຽວໃຫ້ມີຫລາຍສີສັນ, ສ້າງຕາຕະລາງທ່ອງທ່ຽວປະຈຳປີ ແລະ ອື່ນໆ

**ນສພ. ວຽງຈັນໃໝ່ 05/08/2022**

## ສພຂ...



(ສພຂ) ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ຊຸດທີ II ໄດ້ໄຂຂຶ້ນຢ່າງເປັນທາງການໃນຕອນເຊົ້າຂອງວັນທີ 9 ສິງຫາ 2022 ທີ່ຫໍປະຊຸມໃຫຍ່ຂອງແຂວງໄຊຍະບູລີພາຍໃຕ້ການເປັນປະທານຂອງທ່ານ ເພັງນິລັນ ຄໍາພັນເພັງ ປະທານສະພາປະຊາຊົນແຂວງ; ເປັນກຽດເຂົ້າຮ່ວມມີທ່ານ ພົງສະຫວັນ ສິດທະວົງ ກໍາມະການສູນກາງພັກ, ເຈົ້າແຂວງໄຊຍະບູລີ; ທ່ານ ປອ. ລີເບີ ລີບົວປາວ ກໍາມະການສູນກາງພັກ, ສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 7; ບັນດາທ່ານຄະນະປະຈໍາພັກແຂວງ, ຄະນະປະຈໍາສະພາປະຊາຊົນແຂວງ, ກໍາມະການພັກແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈໍາເຂດເລືອກຕັ້ງ, ອາດີດການນໍາຂອງແຂວງ, ອາດີດ ສສຊ-ສສຂ, ສະມາຊິກສະພາປະຊາຊົນແຂວງ (ສສຂ),ນັກປະຕິວັດອາວຸໂສ-ບໍານານ, ຜູ້ຊົງຄຸນວຸດທິ, ຕາງໜ້າອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ນາຍບ້ານເທດສະບານ, ນັກທຸລະກິດ ແລະ ຜູ້ປະກອບການເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ຈະໄດ້ສຸມໃສ່ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາ ບັນຫາສໍາຄັນຂອງແຂວງ ດັ່ງນີ້: ຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈໍາ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນການປະຈໍາ 6 ເດືອນທ້າຍປີ 2022 ຂອງແຂວງ; ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍ ໃນຂົງເຂດສຶກສາທິການ ແລະ ກິລາ ເປັນຕົ້ນ ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກໍາ; ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດພະຍາດໂຄວິດ 19; ບົດລາຍງານ ກ່ຽວກັບການເຄື່ອນໄຫວວຽກງານໄລຍະກອງປະຊຸມສະໄໝສາມັນ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II; ພິເສດ, ກອງປະຊຸມຍັງຈະໄດ້ຄົ້ນຄ້ວາພິຈາລະນາ ແລະ ຮັບຮອງເອົາຮ່າງນິຕິກໍາໃຕ້ກົດໝາຍຈໍານວນ 3 ສະບັບຄື: ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍກອງທຶນເລືອດ (ສ້າງໃໝ່); ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການສ້າງຕັ້ງກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ (ປັບປຸງ) ແລະ ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການຄຸ້ມຄອງພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ (ປັບປຸງ); ພ້ອມນັ້ນ, ກອງປະຊຸມ ຍັງຈະໄດ້ຮັບຟັງການປະກອບຄໍາເຫັນຂອງຕາງໜ້າຄະນະປະຈໍາສະພາປະຊາຊົນແຂວງ ແລະ ຮັບຟັງການຂຶ້ນຊີ້ແຈງຂອງພາກສ່ວນກ່ຽວຂ້ອງຈໍານວນໜຶ່ງຕໍ່ຄໍາຊັກຖາມຂອງບັນດາ ສສຂ.

ໃນໂອກາດນີ້, ທ່ານ ເພັງນິລັນ ຄໍາພັນເພັງ ໄດ້ຮຽກຮ້ອງມາຍັງບັນດາທ່ານ, ແຂກ, ຜູ້ແທນກອງປະຊຸມ ຈົ່ງຍົກສູງຄວາມຮັບຜິດຊອບ ໃນການຄົ້ນຄວ້າປະກອບຄໍາຄິດຄໍາເຫັນ, ພ້ອມກັນເຂົ້າຮ່ວມຢ່າງຕັ້ງໜ້າ, ສືບຕໍ່ໃຫ້ຄວາມຮ່ວມມືສະໜອງຂໍ້ມູນ ຕໍ່ບັນດາເນື້ອໃນທີ່ນໍາມາພິຈາລະນາໃນກອງປະຊຸມ ແລະ ພ້ອມທັງນໍາໃຊ້ສິດປະຊາທິປະໄຕຂອງຕົນຄົ້ນຄວ້າ, ປະກອບຄໍາເຫັນຢ່າງເລິກເຊິ່ງ, ຖີ່ຖ້ວນ, ພາວະວິໄສ ເພື່ອຮັບປະກັນໃຫ້ເນື້ອໃນທີ່ນໍາມາພິຈາລະນາ, ຮັບຮອງໃນຄັ້ງນີ້ມີຄຸນນະພາບ ແລະ ສາມາດນໍາໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທໍາ.

(ນີ່ຕູ່ ປະສິດທິພົງ)



## ກອງປະຊຸມ...

ນະບໍລິຫານງານພັກແຂວງ, ປະທານ ສພຂ ອຸດົມໄຊ ຊຸດທີ II, ເຂົ້າຮ່ວມກອງປະຊຸມຄັ້ງນີ້ມີທ່ານ ບຸນຄົງ ຫລ້າຈຽມພອນ ກໍາມະການສໍາຮອງສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງອຸດົມໄຊ; ມີຮອງເຈົ້າແຂວງ, ບັນດາທ່ານຄະນະປະຈໍາພັກແຂວງ, ກໍາມະການພັກແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈໍາເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຫົວໜ້າ-ຮອງຫົວໜ້າພະແນກ, ບັນດາທ່ານອາດີດການນໍາຂັ້ນແຂວງ, ອາດີດ ສສຊ, ອາດີດ ສສຂ, ບັນດາທ່ານຕາງໜ້າອົງການຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດແຂວງ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, 2 ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ບັນດາທະນາຄານທຸລະກິດ ແລະ ແຂກຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ, ຈະໄດ້ຮັບຟັງການລາຍງານໂດຍສັງເຂບຂອງທ່ານເຈົ້າແຂວງ ກ່ຽວກັບວຽກງານການບໍລິຫານລັດ ປະຈໍາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈໍາ 6 ເດືອນທ້າຍປີ 2022; ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈໍາ 6 ເດືອນທ້າຍປີ 2022; ບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈໍາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈໍາ 6 ເດືອນທ້າຍປີ 2022. ຕິດພັນກັບການຈັດຕັ້ງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ພາຍໃນແຂວງອຸດົມໄຊ; ບົດລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຊົດເຊີຍຜົນກະທົບຈາກໂຄງການພັດທະນາແຄມນໍ້າກໍເຂດເທດສະບານເມືອງໄຊ ແລະ ການຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ຊ່ວງຜ່ານແຂວງອຸດົມໄຊ ນອກແລວແດງ; ບົດລາຍງານກ່ຽວກັບການແກ້ໄຂບັນຫາເສດຖະກິດ, ການຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກ ແລະ ສະພາບຄວາມຫຍຸ້ງຍາກທາງດ້ານນໍ້າມັນເຊື້ອໄຟ ພາຍໃນແຂວງອຸດົມໄຊ; ບົດລາຍງານກ່ຽວກັບບັນຫາຮ້ານແລກປ່ຽນ, ການຄຸ້ມຄອງເງິນຕາ ແລະ ການແກ້ໄຂບັນຫາເງິນເຟີ້; ບົດລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງສະໜາມກິລາ ແຂວງອຸດົມໄຊ ສະບັບເລກທີ 69/ຈຂ.ອຊ, ລົງວັນທີ 29 ມັງກອນ 2021 ແລະ ການຈັດຕັ້ງປະຕິບັດວຽກງານກິລາ-ກາຍຍະກໍາ; ບົດລາຍງານຂອງຄະນະປະຈໍາສະພາປະຊາຊົນແຂວງກ່ຽວກັບການເຄື່ອນໄຫວວຽກງານຂອງ ສພຂ ປະຈໍາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈໍາ 6 ເດືອນທ້າຍປີ 2022 ແລະ ການພິຈາລະນາຮັບຮອງເອົາການສ້າງນິຕິກໍາໃຕ້ກົດໝາຍ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ຈໍານວນ 2 ສະບັບ (ສ້າງໃໝ່ 1 ສະບັບ ແລະ ປັບປຸງ 1 ສະບັບ); ພ້ອມນັ້ນ, ບັນດາຜູ້ແທນກອງປະຊຸມຍັງຈະໄດ້ຮັບຟັງການຊີ້ແຈງຈາກພາກສ່ວນທີ່ກ່ຽວຂ້ອງຈໍານວນໜຶ່ງຕໍ່ຄໍາຊັກຖາມຂອງບັນດາທ່ານ ສສຊ ແລະ ສສຂ.

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ອຸດົມໄຊ ຊຸດທີ II ຈະໄດ້ດໍາເນີນໄປຈົນຮອດວັນທີ 10 ສິງຫາ 2022 (ເປັນເວລາ 2 ວັນເຕັມ) ຈຶ່ງຈະສໍາເລັດ.

(ແສງພອນ ອິນນະລັງ)

## ຮຽບຮຽງ...

(ສພຊ) ເພື່ອເປັນການຄົ້ນຄວ້າບັນດາຄໍາເຫັນຂອງສະມາຊິກສະພາແຫ່ງຊາດ ທີ່ໄດ້ມີຄໍາເຫັນສະເໜີໃຫ້ປັບປຸງໃສ່ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ ເຊິ່ງຖືກຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 7 ກໍລະກົດ 2022 ໂດຍມີສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມ 155 ທ່ານ, ເຫັນດີ 149 ທ່ານ ເທົ່າກັບ 96,13% ບໍ່ເຫັນດີ 6 ທ່ານ ເທົ່າກັບ 3,87% ແນໃສ່ເຮັດໃຫ້ເນື້ອໃນຂອງກົດໝາຍມີຄວາມຄົບຖ້ວນ, ສົມບູນ ແລະ ສາມາດຈັດຕັ້ງປະຕິບັດໄດ້.

ກອງປະຊຸມຮຽບຮຽງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ ຕາມການປະກອບຄໍາເຫັນຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ປະກອບຄໍາເຫັນ ທັງໝົດ 19 ທ່ານ ແລະ ສົ່ງເອກະສານປະກອບຄໍາເຫັນ ຈໍານວນ 5 ທ່ານ ກວມເອົາ 4 ມາດຕາ, 36 ເນື້ອໃນ ໃນລະຫວ່າງວັນທີ 3-4 ສິງຫາ 2022 ຢູ່ທີ່ລ່ອງງື່ມວິວລີສອດ ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກໍາມາທິການກົດໝາຍ ສະພາແຫ່ງຊາດ; ມີທ່ານ ຄໍາແພງ ວິລະພັນ ປະທານກໍາມາທິການຍຸຕິທໍາ, ທ່ານ ບຸນຂວາງ ທະວີສັກ ຮອງປະທານສານປະຊາຊົນສູງສຸດ, ຮອງລັດຖະມົນຕີກະຊວງຍຸຕິທໍາ, ບັນດາທ່ານຮອງປະທານກໍາມາທິການຍຸຕິທໍາ, ກໍາມາທິການກົດໝາຍ, ຄະນະທີ່ປຶກສາດ້ານກົດໝາຍຂອງຄະນະປະຈໍາສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນຈາກພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

(ນາງ ປາກາລັກ ພົມມີໄຊ)

## ນໍ້າໃຈ...

ກັນຢ່າງກວ້າງຂວາງ ເຂົ້າເຖິງຜູ້ຊົມ ແລະ ຜູ້ອ່ານ ແມ່ນຈະຕ້ອງໄດ້ສືບຕໍ່ປຸກລະດົມ ບໍ່ວ່າຈະເປັນດ້ານທຶນຮອນເພື່ອຊຸກຍູ້ວຽກງານສື່ມວນຊົນຂອງສະພາແຫ່ງຊາດ ໃຫ້ມີຄວາມເຂັ້ມແຂງເທື່ອລະກ້າວ; ສືບຕໍ່ຊີ້ນໍາ-ນໍາພາຢ່າງໃກ້ສິດ ຕໍ່ບັນດາໜ້າວຽກ; ສືບຕໍ່ເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ພະນັກງານພາຍໃນກົມສື່ມວນຊົນ ກໍຄືບັນດາຕາໜ່າງຂ່າວ ຢູ່ພາຍໃນສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມເຂັ້ມແຂງຍິ່ງໆຂຶ້ນ.

ເນື່ອງໃນໂອກາດວັນສໍາຄັນຂອງສື່ມວນຊົນ ຄົບຮອບ 72 ປີ (13 ສິງຫາ 1950-13 ສິງຫາ 2022) ຄະນະບັນນາທິການສື່ມວນຊົນສະພາແຫ່ງຊາດ ຂໍອວຍພອນໃຫ້ການນໍາພັກ-ລັດ ຈົ່ງມີສຸຂະພາບເຂັ້ມແຂງຊີ້ນໍາ-ນໍາພາປະເທດຊາດ ໃຫ້ໄປສູ່ຄວາມຈະເລີນຮຸ່ງເຮືອງ, ອວຍພອນການນໍາຂອງສະພາແຫ່ງຊາດທຸກທ່ານ ຈົ່ງມີສຸຂະພາບພາລະນາໄມສົມບູນສືບຕໍ່ນໍາພາ-ຊີ້ນໍາສື່ມວນຊົນຂອງສະພາແຫ່ງຊາດ ໃຫ້ນັບມື້ນັບແຫລມຄົມໃນໜ້າທີ່ທີ່ມີກຽດສະຫງ່າຂອງຕົນ ນໍ້າໃຈວັນສື່ມວນຊົນໝັ້ນຍືນ.

## ລະດົມ...

ຈັດຕັ້ງປະຕິບັດກົດໝາຍ ແລະ ຮ່າງຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ເປັນບ່ອນອີງໃຫ້ບັນດາ ກໍາມາທິການຂອງສະພາແຫ່ງຊາດ ກ່ຽວກັບວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ມີຄວາມເປັນເອກະພາບກັນ ໃນການປະຕິບັດວຽກງານດັ່ງກ່າວ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກໂຄງການ WFD (Westminster Foundation for Democracy).

(ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ)



## ເຜີຍແຜ່ບັນດາເອກະສານສຳຄັນຕ່າງໆ ໃຫ້ສະມາຊິກພັກ-ພະນັກງານ ສພຂ ວຽງຈັນ



(ສພຊ) ໃນຕອນເຊົ້າວັນທີ 28 ກໍລະກົດ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ຈັດພິທີເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເອກະສານສຳຄັນຕ່າງໆ ໃຫ້ແກ່ສະມາຊິກພັກ-ພະນັກງານ ສພຂ ວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນສອນ ເພັດລາວັນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີທ່ານ ລຳໄມ ກູດລາວົງ ຄະນະປະຈຳພັກແຂວງ, ຮອງປະທານ ສພຂ, ທ່ານ ນາງ ຈັນທະຄອນ ສີອຳພອນ ກຳມະການພັກແຂວງ, ຮອງປະທານ ສພຂ ວຽງຈັນ, ບັນດາຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫລອດຮອດສະມາຊິກພັກ-ພະນັກງານພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ນຳເອົາເອກະສານທີ່ສຳຄັນມາຈັດຕັ້ງເຜີຍແຜ່ ເປັນຕົ້ນແມ່ນຄຳແນະນຳຂອງຄະນະປະຈຳ ສພຊ ກ່ຽວກັບການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX, ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX, ຂໍ້ຕົກລົງຂອງປະທານ ສພຂ ກ່ຽວກັບແຜນການກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ວຽງຈັນ ຊຸດທີ II, ມະຕິກອງປະຊຸມຄົບຄະນະຂອງບໍລິຫານງານສູນກາງພັກ ຄັ້ງທີ 4 ສະໄໝທີ XI ແລະ ເອກະສານວັນຄ້າຍວັນເກີດ ປະທານສຸພານຸວົງ ຄົບຮອບ 113 ປີ ເຊິ່ງທັງໝົດນີ້ ທ່ານໄດ້ຍົກໃຫ້ເຫັນເຖິງໝາກຜົນຂອງກອງປະຊຸມສະໄໝສາມັນສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ໃນສະພາບເສດຖະກິດມີການຫັນປ່ຽນຢ່າງໄວວາ ແຕ່ຍ້ອນຄວາມເອົາໃຈໃສ່ຂອງການນຳຂັ້ນສູງ ແລະ ການນຳທຸກຂັ້ນເຮັດໃຫ້ປະເທດເຮົາຜ່ານຜ່າຄວາມຫຍຸ້ງຍາກ ແລະ ມີສະຖຽນລະພາບທາງດ້ານການເມືອງທີ່ໝັກແໜ້ນ. ນອກຈາກນັ້ນ, ກອງປະຊຸມຍັງໄດ້ມີການເຜີຍແຜ່ເອກະສານວັນຄ້າຍວັນເກີດທ່ານຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວ ກໍຄືວັນຄ້າຍວັນເກີດປະທານ ສຸພານຸວົງ ຄົບຮອບ 113 ປີ ໃຫ້ສະມາຊິກພັກພະນັກງານພາຍໃນ ສພຂ ໄດ້ຮັບຮູ້ ແລະ ຮໍ່າຮຽນເອົາແບບຢ່າງນໍ້າໃຈຮັກຊາດອັນດູດດື່ມ, ຈິດໃຈຕໍ່ສູ້ພິລະອາດຫານກ້າແກ່ນ, ທັດສະນະຫລັກໝັ້ນອັນໝັກແໜ້ນ ແລະ ນໍ້າໃຈເສຍຫລະອັນສູງສົ່ງເພື່ອຊາດເພື່ອປະຊາຊົນ ແລະ ຮໍ່າຮຽນເອົາແບບຢ່າງຄຸນສົມບັດສິນທຳປະຕິວັດອັນຜ່ອງໃສ ກໍຄືແບບຢ່າງໃນການດຳລົງຊີວິດ ແລະ ອຸດທິດຕົນເພື່ອພາລະກິດຂອງພັກຂອງປະທານ ສຸພານຸວົງ ພ້ອມທັງເຫັນປະຫວັດຄວາມເປັນມາ, ມູນເຊື້ອແຫ່ງການພົວພັນມິດຕະພາບ-ການຮ່ວມມືດ້ານສາມັກຄີພິເສດລະຫວ່າງ ສປປລາວ ແລະ ສສ. ຫວຽດນາມ.

ໃນໂອກາດນີ້, ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກປະທານກອງປະຊຸມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາ. ພ້ອມນັ້ນ, ຍັງໄດ້ເນັ້ນໜັກໃຫ້ບັນດາຄະນະນຳ ຕະຫລອດຮອດສະມາຊິກພັກ-ພະນັກງານພາຍໃນ ສພຂ ວຽງຈັນ ຈົ່ງຍົກສູງຄວາມຮັບຜິດຊອບການເມືອງ ເຂົ້າໃນວຽກງານທີ່ຕົນຮັບຜິດຊອບ ໂດຍສະເພາະການພົວພັນປະສານງານກັບບັນດາຄະນະກຳມະການ, ຂະແໜງການໃຫ້ມີຄວາມສອດຄ່ອງກົມກຽວກັນ ເພື່ອຮັບປະກັນໃຫ້ການປະຕິບັດພາລະບົດບາດຂອງ ສພຂ ນັບມື້ນັບມີການຫັນປ່ຽນດີຂຶ້ນເປັນກ້າວໆ.

(ນັກຂ່າວ ສພຂ ວຽງຈັນ)

## ພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021



(ສພຊ) ຕອນເຊົ້າວັນທີ 27 ກໍລະກົດ 2022 ໜ່ວຍພັກສະພາປະຊາຊົນແຂວງ (ສພຂ) ຫລວງນໍ້າທາ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ພະແນກຍຸຕິທຳແຂວງຫລວງນໍ້າທາ ໄດ້ຈັດພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຮອບທີ IV ຄັ້ງທີ IV ປະຈຳປີ 2021 ແລະ ທິດທາງແຜນການປີ 2022 ທີ່ຫ້ອງປະຊຸມ ສພຂ ພາຍໃຕ້ການເປັນປະທານຂອງສະຫາຍ ຄຳຟອງ ອິນມານີ ຮອງເລຂາພັກແຂວງ, ປະທານ ສພຂ; ມີຄະນະໜ່ວຍພັກ 4 ໜ່ວຍພັກ ພ້ອມດ້ວຍສະມາຊິກພັກສົມບູນພາຍໃນເຂົ້າຮ່ວມທັງໝົດ 35 ສະຫາຍ ຍິງ 15 ສະຫາຍ.

ໃນພິທີ, ໄດ້ຮັບຟັງບົດສະຫລຸບຫຍໍ້ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຂອງໜ່ວຍພັກພະແນກຍຸຕິທຳ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ສພຂ ຮອບທີ IV, ຄັ້ງທີ IV ປະຈຳປີ 2020 ແລະ ທິດທາງແຜນການປີ 2021 ເຊິ່ງໄລຍະ 1 ປີຜ່ານມາ ບັນດາໜ່ວຍພັກໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດເປັນປົກກະຕິ, ດຳເນີນຊີວິດການເມືອງ ເພື່ອປັບປຸງປົວແປງພັກ, ຍົກສູງຄຸນນະພາບຂອງໜ່ວຍພັກ ແລະ ສະມາຊິກພັກໃຫ້ໜັກແໜ້ນ, ເຂັ້ມແຂງ ເພື່ອເສີມຂະຫຍາຍຈຸດດີ, ແກ້ໄຂຈຸດອ່ອນ ແລະ ໄດ້ຕີລາຄາເມີນຜົນໜ່ວຍພັກທັງ 4 ແມ່ນຈັດປະເພດໜ່ວຍພັກແຂງ, ສະມາຊິກພັກແຂງທັງ 4 ໜ່ວຍ 115 ສະຫາຍ ຍິງ 47 ສະຫາຍ ແລະ ສືບຕໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃຫ້ໄດ້ 10 ຄະແນນ; ສ້າງສະມາຊິກພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃຫ້ໄດ້ 100%; ພ້ອມນັ້ນ ຍັງໄດ້ຮັບຟັງມະຕິຕົກລົງສະບັບເລກທີ 14/ຄປພຂ, ລົງວັນທີ 21 ມີນາ 2022 ວ່າດ້ວຍການຮັບຮອງເອົາໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2020 ແລະ ໄດ້ມອບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2020 ໃຫ້ທັງ 4 ໜ່ວຍພັກ ໂດຍໃຫ້ກຽດມອບຂອງສະຫາຍ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານ ສພຂ ຮັບໂດຍເລຂາໜ່ວຍພັກທັງ 4 ໜ່ວຍ.

(ນາງ ອຳພອນ ສີປະເສີດ)

## ຄຍປປ ເຊກອງ ເຮັດວຽກຮ່ວມກັບຂົງເຂດປົກປ້ອງກົດໝາຍ, ສອງກຳລັງປະກອບອາວຸດ ຢູ່ເມືອງດາກຈຶງ



(ສພຊ) ໃນລະຫວ່າງວັນທີ 26-27 ກໍລະກົດ 2022 ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ສະພາປະຊາຊົນແຂວງ (ສພຂ) ເຊກອງ ແລະ ອົງການຕຸລາການ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຮ່ວມກັບຂົງເຂດປົກປ້ອງກົດໝາຍ, ສອງກຳລັງປະກອບອາວຸດ ຢູ່ເມືອງດາກຈຶງ ນຳໂດຍ ທ່ານ ດົງເພັດ ພະຍົນ ປະທານ ສພຂ ເຊກອງ ໂດຍການຕ້ອນຮັບຂອງທ່ານ ເພັງນາ ຈັນທະພອນ ປະທານກວດກາພັກ-ລັດເມືອງ, ເຂົ້າຮ່ວມມີສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເມືອງ, ຫົວໜ້າຫ້ອງການຍຸຕິທຳເມືອງ, ຫົວໜ້າກອງບັນຊາການທະຫານເມືອງ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບເມືອງ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງ 6 ເດືອນທ້າຍປີ ຂອງອຳນາດການປົກຄອງເມືອງ ກ່ຽວກັບວຽກງານວາລະແຫ່ງຊາດການແກ້ໄຂບັນຫາຢາເສບຕິດ ເຊິ່ງໃນໄລຍະຜ່ານມາບັນຫາຢາເສບຕິດຢູ່ເມືອງ ກໍຄືຕາມບ້ານຕ່າງໆ ຖືເປັນບັນຫາສຳຄັນທີ່ຈະຕ້ອງໄດ້ເລັ່ງປາບປາມສະກັດກັ້ນການແຜ່ລະບາດໃຫ້ໄດ້ຫລາຍທີ່ສຸດ, ຄະນະນຳຂັ້ນເມືອງກໍໄດ້ລົງເຜີຍແຜ່ນິຕິກຳການຈັດຕັ້ງປະຕິບັດວາລະແຫ່ງຊາດຢູ່ຂັ້ນເມືອງດາກຈຶງ ແລະ ກຸ່ມດາກຈຶງຄື: ກຸ່ມອາຢູນ, ກຸ່ມຊຽງຫລວງ, ກຸ່ມດາກດຶມ, ກຸ່ມຕາຕີ, ກຸ່ມເຊກະໝານ, ກຸ່ມນໍ້າແດ, ກຸ່ມດາກປຣາ ໄດ້ສຳເລັດ; ນອກນີ້, ໄດ້ກຳນົດເຂດການແຜ່ລະບາດຂອງຢາເສບຕິດ ໂດຍຕີລາຄາການແຜ່ລະບາດມີ 2 ລະດັບ (ກາງ-ໜ້ອຍ) ຂອງແຕ່ລະບ້ານຢ່າງລະອຽດ.

ໂອກາດດັ່ງກ່າວ, ທ່ານ ດົງເພັດ ພະຍົນ ໄດ້ໂອ້ລົມຕໍ່ກັບບັນຫາດັ່ງກ່າວ ໂດຍທ່ານໄດ້ເນັ້ນເຖິງວິທີການທີ່ຈະໃຊ້ໃນການປາບປາມສະກັດກັ້ນບັນຫາຢາເສບຕິດ, ຂອດການປະສານງານຕ່າງໆໃນການຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງລະຫວ່າງຂັ້ນບ້ານ-ເມືອງ, ເມືອງ-ແຂວງໃຫ້ໜັກແໜ້ນຂຶ້ນຕື່ມ ເພື່ອໃຫ້ໄດ້ປະສິດທິຜົນທີ່ດີຂຶ້ນກວ່າເກົ່າ.

ຈາກນັ້ນ, ໃນຕອນບ່າຍຂອງວັນດຽວກັນ ຄະນະກໍໄດ້ອອກຕິດຕາມເບິ່ງສະຖານທີ່ເຂດແດນທີ່ຈະໃຊ້ເປັນບ່ອນກໍ່ສ້າງອາຄານສານເຂດປະຈຳເມືອງ ແລະ ໄດ້ຢ້ຽມຢາມຫ້ອງຄຸມຂັງ, ສາງເກັບອາວຸດຕ່າງໆທີ່ເມືອງຍຶດໄວ້ໄດ້ຕື່ມອີກ.

ທັງນີ້, ກໍເພື່ອເຮັດໃຫ້ບັນຫາຢາເສບຕິດ ເປັນຕົ້ນກຸ່ມເສບ, ກຸ່ມຄ້າ-ຂາຍ ພາຍໃນເມືອງໃຫ້ຫລຸດໜ້ອຍຖອຍລົງ, ອຳນາດການປົກຄອງທຸກຂັ້ນໄດ້ເອົາໃຈໃສ່ຢ່າງຕັ້ງໜ້າວາງນະໂຍບາຍປະກາດໃຊ້ກົດໝາຍ, ນຳໃຊ້ມາດຕະການ ແລະ ວິທີການຕ່າງໆ ໂດຍມີແນວທາງຂອງພັກ-ລັດ, ມີນິຕິກຳຕ່າງໆເປັນບ່ອນອີງໃນການຈັດຕັ້ງປະຕິບັດ, ປາບປາມສະກັດກັ້ນບັນຫາຢາເສບຕິດໃຫ້ໝົດໄປຈາກເມືອງ.

(ສຸກກະສັນ ບົວລະພາ)

## ພະນັກງານ ສພຂ ສາລະວັນ ອອກພັກການ-ຮັບນະໂຍບາຍອຸດໜູນບຳນານ



(ສພຊ) ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດພິທີປະກາດພະນັກງານ ສພຂ ອອກພັກການ-ຮັບນະໂຍບາຍອຸດໜູນບຳນານ ໃນວັນທີ 27 ກໍລະກົດຜ່ານມາ, ທີ່ຫ້ອງປະຊຸມ ສພຂ ສາລະວັນ ໂດຍການເຂົ້າຮ່ວມຂອງ ທ່ານນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ, ມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ, ແຂກຖືກເຊີນເຂົ້າຮ່ວມ.

ໃນພິທີ, ໄດ້ຜ່ານມະຕິຕົກລົງຂອງເຈົ້າແຂວງສາລະວັນ ສະບັບເລກທີ 400/ຈຂ, ລົງວັນທີ 24 ມິຖຸນາ 2022 ວ່າດ້ວຍໃຫ້ທ່ານ ເພັດສະໝອນ ສີລີວົງສາ ຫົວໜ້າຂະແໜງແຜນການ-ການເງິນ ອອກພັກການຮັບອຸດໜູນບຳນານ ເລີ່ມແຕ່ງວດ III ປີ 2022 ເປັນຕົ້ນໄປ.

ໃນໂອກາດນີ້, ທ່ານ ນາງ ສູນໄຖ ໄຊຍະແສງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍທ່ານ ເພັດສະໝອນ ສີລີວົງສາ ທີ່ໄດ້ປະກອບສ່ວນອຸທິດຕົນເຂົ້າໃນພາລະກິດປະຕິວັດຊາດເປັນເວລາ 38 ປີ ນັບແຕ່ປີ 1984 ເປັນຕົ້ນມາ ແລະ ໄດ້ປະກອບສ່ວນອັນສຳຄັນ ເຂົ້າໃນການເຄື່ອນໄຫວວຽກງານຂອງພັກ-ລັດ, ມີຜົນງານການເຄື່ອນໄຫວດີເດັ່ນ ແລະ ໄດ້ມີຜົນສຳເລັດໃນຫລາຍດ້ານ ເຊິ່ງເປັນການປະກອບສ່ວນເຂົ້າໃນການປະຕິບັດໜ້າທີ່ການປະຕິວັດຊາດ ປະຊາທິປະໄຕ ແລະ ສອງໜ້າທີ່ຍຸດທະສາດ ຄື: ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ທັງເນັ້ນໜັກໃຫ້ສືບຕໍ່ຍຶດໝັ້ນຕໍ່ອຸດົມການຂອງພັກ, ຕໍ່ອຳນາດການປົກຄອງບ້ານ, ສືບຕໍ່ຮັກສາມູນເຊື້ອໃນການຈັດຕັ້ງປະຕິບັດວຽກງານ ເພື່ອປະກອບສ່ວນເຂົ້າໃນປະຕິບັດວຽກງານຢູ່ຂັ້ນບ້ານໃຫ້ມີຄວາມສີວິໄລ.

(ນາງ ຄັດສອນ ຮຸ່ງສະຫວ່າງ ແລະ ດີລຳພົນ ພົມມະຈັນ)

# ສະຫລຸບຕີລາຄາການຈັດຕັ້ງປະຕິບັດ 6 ເດືອນຂອງ ຄລຂ ແລະ 3 ຄະນະກຳມະການ ສພຂ ຜົ້ງສາລີ



(ສພຊ) ໃນລະຫວ່າງວັນທີ 27-29 ກໍລະກົດ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ຈັດກອງປະຊຸມສະຫລຸບຕີລາຄາການຈັດຕັ້ງປະຕິບັດວຽກງານປະຈຳ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ຂອງຄະນະເລຂາທິການ ແລະ 3 ຄະນະກຳມະການ ສພຂ ຜົ້ງສາລີ ເຊິ່ງກອງປະຊຸມຂອງຄະນະເລຂາທິການສະພາປະຊາຊົນແຂວງ (ຄລຂ) ເປັນປະທານໂດຍທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການ ສພຂ; ກອງປະຊຸມຂອງຄະນະກຳມະການຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງຄວາມສະຫງົບ (ຄຍປປ) ເປັນປະທານໂດຍທ່ານ ພັທ. ຄຳດາ ໂສລະພົມ ປະທານ ຄຍປປ, ເຂົ້າຮ່ວມທັງສອງກອງປະຊຸມມີທ່ານ ທຸມເພັງ ຈອມວິສານ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ (ຜູ້ຊີ້ນຳວຽກງານ ຄລຂ ແລະ ຜູ້ຊີ້ນຳວຽກງານ ຄຍປປ); ສ່ວນກອງປະຊຸມຂອງຄະນະກຳມະການຂອງຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ (ຄສຜງ) ເປັນປະທານໂດຍທ່ານ ນາງ ຈັນມະນີ ດວງພາສຸກ ປະທານ ຄສຜງ, ເຂົ້າຮ່ວມໂດຍທ່ານ ສິມຈິດ ທັບລະກອນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ (ຜູ້ຊີ້ນຳວຽກງານ ຄສຜງ) ແລະ ກອງປະຊຸມຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ເປັນປະທານໂດຍທ່ານ ສິມຈິດ ລາວຈຸງ ປະທານ ຄວສຜ, ເຂົ້າຮ່ວມໂດຍທ່ານ ທອງສີ ເສົາສຸລິພົມ ປະທານ ສພຂ ຜົ້ງສາລີ (ກຳມະການສັງກັດ ຄວສຜ); ມີບັນດາທ່ານປະທານ-ຮອງປະທານຄະນະກຳມະການ ສພຂ, ຮອງເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ ເຂົ້າຮ່ວມແຕ່ລະກອງປະຊຸມ.

ທີ່ກອງປະຊຸມຂອງ ຄລຂ ໄດ້ຮັບຟັງທ່ານ ນາງ ຈັນສະຫວັນ ແກ້ວກອງຕັນ ຮອງເລຂາທິການ ສພຂ ຂຶ້ນຜ່ານບົດສະຫລຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ປະຈຳ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງ ຄລຂ; ຈາກນັ້ນ, ຜູ້ແທນກອງປະຊຸມກໍໄດ້ຜັດປ່ຽນກັນປະກອບຄຳເຫັນຕໍ່ເນື້ອໃນບົດສະຫລຸບດັ່ງກ່າວ ຢ່າງກົງໄປກົງມາ.

ທີ່ກອງປະຊຸມ ຄຍປປ ໄດ້ຮັບຟັງທ່ານ ຄຳພັນ ຄູນສິມບັດ ຮອງປະທານ ຄຍປປ ຂຶ້ນຜ່ານບົດສະຫລຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ປະຈຳ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງ ຄຍປປ ເຊິ່ງທ່ານກໍໄດ້ຍົກໃຫ້ເຫັນເຖິງຜົນງານທີ່ຍາດມາໄດ້ໃນໄລຍະຜ່ານມາ ເປັນຕົ້ນແມ່ນຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍທີ່ສະພາແຫ່ງຊາດສົ່ງມາມີຈຳນວນ 13 ສະບັບ ແລະ ເຂົ້າຮ່ວມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຈຳນວນ 4 ສະບັບ; ຮັບຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ 12 ສະບັບ, ຄ້າງໃນປີຜ່ານມາຈຳນວນ 2 ເລື່ອງ ລວມທັງໝົດ 14 ເລື່ອງ ໃນນີ້, ນຳສົ່ງໃຫ້ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ມີ 3 ເລື່ອງ. ຄຍປປ ໄດ້ຄົ້ນຄວ້າ, ແກ້ໄຂສຳເລັດ ມີ 11 ເລື່ອງ ແລະ ພວມຄົ້ນຄວ້າ ແກ້ໄຂມີ 1 ເລື່ອງ ເທົ່າກັບ 95% ລື່ນຄາດໝາຍ 15% ທຽບໃສ່ແຜນການປີ ໃນນີ້, ໄດ້ນຳສົ່ງໃຫ້ພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂ 10 ເລື່ອງ, ແຈ້ງຕອບໃຫ້ຜູ້ຮ້ອງຂໍຄວາມເປັນທຳ 1 ເລື່ອງ, ຮັບຕ້ອນ ແລະ ໃຫ້ຄຳແນະນຳທາງດ້ານກົດໝາຍ ໃຫ້ແກ່ປະຊາຊົນ ຈຳນວນ 2 ຄັ້ງ, ມີ 4 ທ່ານ, ສະມາຊິກສະພາປະຊາຊົນແຂວງ ທີ່ເປັນກຳມະການສັງກັດຄະນະກຳມະການປະຈຳຢູ່ບັນດາເມືອງ ໄດ້ຮັບຄຳຮ້ອງຂໍຄວາມເປັນທຳທັງໝົດ 1 ສະບັບ, ແກ້ໄຂ 1 ສະບັບ. ບັນຫາຄຳຮ້ອງຂໍຄວາມເປັນທຳທີ່ພົ້ນເດັ່ນແມ່ນກ່ຽວກັບຂໍ້ຂັດແຍ່ງທີ່ດິນ. ຈາກນັ້ນ, ຜູ້ແທນກອງປະຊຸມກໍໄດ້ຜັດປ່ຽນກັນປະກອບຄຳເຫັນຕໍ່ເນື້ອໃນບົດສະຫລຸບດັ່ງກ່າວ.

ໂອກາດດັ່ງກ່າວ, ທ່ານ ທຸມເພັງ ຈອມວິສານ ໄດ້ໂອ້ລົມຕໍ່ສອງກອງປະຊຸມ ເຊິ່ງທ່ານໄດ້ກ່າວຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ ຄລຂ ແລະ ຄຍປປ ທີ່ສາມາດຍາດມາໄດ້ໃນໄລຍະຜ່ານມາ ແລະ ທ່ານຍັງໄດ້ເໜັ້ນໜັກບາງຫາຕໍ່ ຄລຂ ເປັນຕົ້ນແມ່ນສືບຕໍ່ເປັນໃຈກາງໃນການສຶກສາອົບຮົມການເມືອງ-ແນວຄິດຂອງພະນັກງານ-ລັດຖະກອນ ໃຫ້ເປັນປົກກະຕິ, ຕໍ່ເນື່ອງ; ປັບປຸງລະບອບແບບແຜນວິທີເຮັດວຽກ, ແບບແຜນນຳພາໃຫ້ມີຄວາມເຂັ້ມແຂງ ແລະ ປັບປຸງຂອດການປະສານງານລະຫວ່າງ ຄລຂ ກັບບັນດາຄະນະກຳມະການ, ພາກສ່ວນທີ່ກ່ຽວຂ້ອງພາຍນອກ ເພື່ອເຮັດໃຫ້ການປະຕິບັດພາລະບົດບາດຂອງຕົນ ໃຫ້ມີຄວາມກົມກຽວ; ເອົາໃຈໃສ່ຊີ້ນຳຄົ້ນຄວ້າ, ກຳແໜ້ນບັນດາກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວຂ້ອງທີ່ວາງອອກໃນແຕ່ລະໄລຍະໃຫ້ເລິກເຊິ່ງ ແລະ ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານຕາມພາລະບົດບາດ ໃຫ້ເລິກເຊິ່ງເຖິງຖອງ; ເອົາໃຈໃສ່ເປັນເສນາທິການໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສພຂ ໃນການສ້າງເງື່ອນໄຂອຳນວຍຄວາມສະດວກຮອບດ້ານໃຫ້ແກ່ການເຄື່ອນໄຫວວຽກງານບົນພື້ນຖານລະບຽບກົດໝາຍທີ່ກຳນົດໄວ້ ທັງໄດ້ເນັ້ນໜັກຕໍ່ ຄຍປປ ຍົກສູງຄຸນນະພາບການເປັນເສນາທິການໃນການຄົ້ນຄວ້າພິຈາລະນາ ແລະ ແກ້ໄຂຄຳຮ້ອງ, ຄຳສະເໜີຕ່າງໆຂອງພົນລະເມືອງ ເຫັນວ່າຍັງຊັກຊ້າ; ກວດກາ ແລະ ປັບປຸງຄືນ ຕໍ່ກັບທິດທາງແຜນການຂອງ ຄຍປປ ໂດຍຫັນຈາກແຜນດຳເນີນງານຂອງຄະນະປະຈຳສະພາປະຊາຊົນແຂວງ ມາຫັນເປັນແຜນວຽກຈຸດສຸມອັນລະອຽດຂອງຄະນະກຳມະການຕົນ ທັງໄດ້ເໜັ້ນບາງຫາຕໍ່ ຄຍປປ ໃຫ້ສືບຕໍ່ປັບປຸງແບບແຜນວິທີເຮັດວຽກ, ແບບແຜນນຳພາຂອງຄະນະກຳມະການ ພ້ອມທັງ ເພີ່ມທະວີການເຕົ້າໂຮມຄວາມສາມັກຄີໃຫ້ເປັນປຶກແຜ່ນ, ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານ-ລັດຖະກອນ.

ທີ່ກອງປະຊຸມ ຄສຜງ ໄດ້ຮັບຟັງທ່ານ ສຸວັນພູ ລາວ ຮອງປະທານ ຄສຜງ ຂຶ້ນຜ່ານບົດສະຫລຸບການຈັດຕັ້ງປະຕິບັດວຽກງານປະຈຳ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ຂອງ ຄສຜງ; ຈາກນັ້ນ, ຜູ້ແທນກອງປະຊຸມກໍໄດ້ຜັດປ່ຽນກັນປະກອບຄຳເຫັນຕໍ່ເນື້ອໃນດັ່ງກ່າວ ເພື່ອປັບປຸງເນື້ອໃນໃຫ້ມີຄວາມອຸດົມສົມບູນ ທັງຮັບປະກັນໃຫ້ທິດທາງແຜນການ ມີຄວາມຮັດກຸມ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າໄດ້ ຢ່າງມີປະສິດທິພາບ, ປະສິດທິຜົນ.

ໂອກາດດຽວກັນນັ້ນ, ທ່ານ ສິມຈິດ ທັບລະກອນ ໄດ້ໂອ້ລົມຕໍ່ກອງປະຊຸມ ເຊິ່ງທ່ານໄດ້ກ່າວຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ ຄສຜງ ຍາດມາໄດ້ໃນໄລຍະຜ່ານມາ ແລະ ເພື່ອເປັນທິດໃນການເຄື່ອນໄຫວວຽກງານໃນຕໍ່ໜ້າທ່ານໄດ້ເໜັ້ນໜັກບາງບັນຫາ ເປັນຕົ້ນແມ່ນໃຫ້ສືບຕໍ່ປັບປຸງບັນດາເນື້ອໃນບົດສະຫລຸບ ປະຈຳ 6 ເດືອນຕົ້ນປີ ແລະ ແຜນ 6 ເດືອນທ້າຍປີ 2022 ໃຫ້ຖືກຕ້ອງສອດຄ່ອງ ແລະ ພາວະວິໄສ; ເພີ່ມທະວີການຊີ້ນຳ-ນຳພາໂດຍສະເພາະດ້ານການເມືອງແນວຄິດໃຫ້ພະນັກງານ-ລັດຖະກອນ ໃນການຄົ້ນຄ້ວາ, ເຊື່ອມຊຶມ, ກຳແໜ້ນແນວທາງນະໂຍບາຍຂອງພັກ-ລັດ, ບັນດາກົດໝາຍ ແລະ ບັນດານິຕິກຳຕ່າງໆ ພ້ອມທັງຍົກສູງການກຳແໜ້ນທີ່ຕັ້ງ, ພາລະບົດ, ສິດ ແລະ ໜ້າທີ່ຂອງຄະນະກຳມະການຕົນຢ່າງເລິກເຊິ່ງ; ປັບປຸງແບບແຜນວິທີເຮັດວຽກ ແລະ ເປັນເຈົ້າການຍົກສູງສະຕິຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ ໂດຍອີງໃສ່ທີ່ຕັ້ງ, ພາລະບົດບາດ ແລະ ຂອບເຂດສິດໜ້າທີ່ຂອງຄະນະກຳມະການທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ; ເພີ່ມທະວີຄວາມສາມັກຄີພາຍໃນໃຫ້ແໜ້ນແຟ້ນ; ເອົາໃຈໃສ່ຕິດຕາມ, ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງອງພະນັກງານ-ລັດຖະກອນ ພາຍໃນຄະນະກຳມະການ ແລະ ເປັນເຈົ້າການປະສານສົມທົບ ແລະ ຊຸກຍູ້ບັນດາຂະແໜງການຂອງແຂວງ ໃນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ທີ່ຈະໄຂຂຶ້ນມໍ່ໆນີ້.

ທີ່ກອງປະຊຸມ ຄວສຜ ໄດ້ຮັບຟັງທ່ານ ນາງ ລຸນ ຄຳວົງໃຈ ຂຶ້ນຜ່ານບົດສະຫລຸບການຈັດຕັ້ງປະຕິບັດວຽກງານປະຈຳ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ຂອງ ຄວສຜ; ຈາກນັ້ນ, ຜູ້ແທນກອງປະຊຸມກໍໄດ້ຜັດປ່ຽນກັນປະກອບຄຳເຫັນຕໍ່ເນື້ອໃນ ດັ່ງກ່າວຢ່າງກົງໄປກົງລັກສະນະສ້າງສັນ ເພື່ອຮັບປະກັນໃຫ້ແກ່ການເນື້ອໃນມີຄວາມຮັດກຸມ, ສອດຄ່ອງຕາມຄວາມຈິງ.

ໃນໂອກາດດຽວກັນນີ້ ທ່ານ ທອງສີ ເສົາສຸລິພົມ ໃຫ້ກຽດໂອລົມຕໍ່ກອງປະຊຸມ ເຊິ່ງກ່ອນອື່ນທ່ານ ກໍໄດ້ກ່າວຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ ຄວສຜ ຍາດມາໄດ້ໃນໄລຍະຜ່ານມາ ແລະ ທ່ານໄດ້ ແໜ້ນບາງຄຳເຫັນ ເພື່ອເປັນທິດທາງໃນການປະຕິບັດວຽກງານໃນຕໍ່ໜ້າ ເປັນຕົ້ນ: “ພະນັກງານນຳພາ, ຄຸ້ມຄອງ ຕ້ອງຍົກສູງຄວາມຮັບຜິດຊອບການເມືອງໃຫ້ສູງຂຶ້ນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໜ້າທີ່ວຽກງານໃນໄລຍະໃໝ່; ເພີ່ມທະວີຄວາມເອົາໃຈໃສ່ ໃນການຫັນປ່ຽນຈິນຕະນາການ ແບບຄົງເດີມ ຂອງພະນັກງານ-ລັດຖະກອນ ໄປສູ່ການຫັນປ່ຽນທີ່ຕັ້ງໜ້າ ແລະ ມີປະສິດທິພາບທີ່ດີ ເພື່ອສາມາດເປັນເສນາທິການໃຫ້ແກ່ຄະນະນຳຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ເປັນທີ່ຍອມຮັບຂອງມະຫາຊົນທີ່ແທ້ຈິງ; ສືບຕໍ່ກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ກໍຄືທິດທາງໜ້າທີ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ຂອງອົງຄະນະພັກແຂວງ, ມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍພັກສະພາປະຊາຊົນແຂວງ ວາງອອກ ແລະ ມະຕິກອງປະຊຸມຄັ້ງປະຖົມມະລຶກ, ສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II; ປັບປຸງແບບແຜນວິທີເຮັດວຽກ; ເພີ່ມທະວີການປະສານສົມທົບກັບຂະແໜງການ ແລະ ເຂົ້າຮ່ວມແຕ່ຫົວທີໃນການກະກຽມສ້າງ, ປັບປຸງນິຕິກຳໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ທີ່ກຳນົດໄວ້; ເພີ່ມທະວີການຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ເອົາໃຈໃສ່ຕິດຕາມກວດກາ ຜົນການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມສະພາປະຊາຊົນແຂວງ ທີ່ໄດ້ຮັບຮອງ”.

(ນາງ ສຸກສົມພອນ ແກ້ວແສງພະຈັນ)



# ສພຂ ບໍ່ແກ້ວ ທາບທາມຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ



(ສພຊ) ຕອນເຊົ້າວັນທີ 27 ກໍລະກົດ 2022 ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ (ສພຂ) ບໍ່ແກ້ວ ໄດ້ຈັດກອງປະຊຸມທາບທາມຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ ພາຍໃຕ້ການເປັນປະທານຂອງທ່ານ ຈອມສີ ລັດຕະນະປັນ ປະທານ ສພຂ ບໍ່ແກ້ວ, ມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 5, ສະມາຊິກສະພາປະຊາຊົນແຂວງທີ່ປະຈຳຢູ່ອ້ອມຂ້າງ ແລະ ເມືອງຫ້ວຍຊາຍ, ຫົວໜ້າອົງການພັດທະນາ ແລະ ບໍລິຫານຕົວເມືອງ ແລະ ຂົງເຂດທີ່ກ່ຽວຂ້ອງ ພ້ອມດ້ວຍພະນັກງານວິຊາການທີ່ຢູ່ໃນຄະນະຮັບຜິດຊອບເຂົ້າຮ່ວມ.

ກອງປະຊຸມດັ່ງກ່າວ, ທ່ານ ວັນນະສານ ໂພທິປັນຍາ ຫົວໜ້າອົງການພັດທະນາ ແລະ ບໍລິຫານຕົວເມືອງ ໄດ້ຂຶ້ນຜ່ານຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ພັດທະນາຕົວເມືອງຫ້ວຍຊາຍ (ສະບັບປັບປຸງ). ຫລັງຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມຕໍ່ກັບຮ່າງຂໍ້ຕົກລົງດັ່ງກ່າວ ແລະ ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງຂໍ້ຕົກລົງດັ່ງກ່າວ ຢ່າງກົງໄປກົງມາ ແລະ ມີຈຸດສຸມ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄວາມເຫັນສັງລວມ ແລະ ກ່າວປິດກອງປະຊຸມ ເຊິ່ງກອງປະຊຸມໄດ້ສເລັດລົງດ້ວຍໝາກຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

(ນາງ ຂັນຖະໜອມ ແກ້ວມະນີ)



## ສຸຂະສະບາຍຫາຍໂຣຄາ

# ພຶດຕິກຳການ ໃຊ້ຄຳບໍ່ສຸພາບຈາກສື່ອອນລາຍ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ການໃຊ້ຄຳບໍ່ສຸພາບ ຫລື ຄຳຫຍາບຂອງເດັກ ອາດເປັນບັນຫາທີ່ຄູ ພໍ່ແມ່ຜູ້ປົກຄອງ ກຳລັງວິຕົກກັງວົນ ໂດຍບໍ່ເຂົ້າໃຈເຖິງສາເຫດ ແລະ ວິທີປ້ອງກັນ ຫລື ແກ້ໄຂ ດັ່ງນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມາສຶກສາ ແລະ ຮຽນຮູ້ນຳກັນເບິ່ງວ່າ ມັນເກີດມາຈາກສາເຫດໃດ ແລະ ມີວິທີທາງແກ້ໄຂ ປ້ອງກັນຄືແນວໃດ.

ການໃຊ້ຊີວິດໃນປັດຈຸບັນ ເຮົາຕ້ອງຍອມຮັບກ່ອນວ່າ ສື່ອອນລາຍເປັນປັດໄຈໜຶ່ງ ທີ່ມີບົດບາດສຳຄັນ ໃນສັງຄົມປັດຈຸບັນ ບໍ່ວ່າຈະເປັນເດັກນ້ອຍ ຫລື ຜູ້ໃຫຍ່ ສື່ອອນລາຍເປັນປັດໄຈໜຶ່ງທີ່ມີອິດທິພົນ ເຮັດໃຫ້ເດັກເກີດການຮຽນແບບການໃຊ້ຄຳບໍ່ສຸພາບ ເພາະເດັກຄິດວ່າ ການໃຊ້ຄຳບໍ່ສຸພາບລະຫວ່າງໝູ່ເພື່ອນ ມັນບໍ່ແມ່ນເລື່ອງທີ່ຜິດ ແລະ ກໍເປັນທີ່ຍອມຮັບເມື່ອເວົ້າ ຫລື ທັກທ້ວງກັນອອກມາເປັນຄຳຫຍາບຄືກັນ.

ກ່ອນອື່ນໝົດ ພໍ່ແມ່ຄວນເຂົ້າໃຈວ່າ ຄຳຫຍາບເປັນພຶດຕິກຳຕາມໄວອາຍຸຂອງເດັກນ້ອຍ ເຊິ່ງອາດຈະຮຽນແບບຈາກໝູ່ເພື່ອນ ຫລື ຜູ້ມີອິດທິພົນໃນສື່ອອນລາຍ; ສະນັ້ນ, ລອງຫາໂອກາດສົນທະນາເຖິງຂໍ້ດີ ແລະ ຂໍ້ເສຍ ຂອງການໃຊ້ຄຳຫຍາບ ແລ້ວແນະນຳໃຫ້ເດັກເຂົ້າໃຈວ່າ ເຂົາສາມາດໄດ້ຮັບການຍອມຮັບຈາກຄົນອື່ນໄດ້ ໂດຍບໍ່ໃຫ້ຄຳຫຍາບ, ສະມາຊິກໃນຄອບຄົວຄວນເປັນຕົວຢ່າງທີ່ດີໃນການໃຊ້ຄຳສັບທີ່ເໝາະສົມ ໃນທຸກໆອະລິຍະບົດ, ພໍ່ແມ່ຄວນຊົມເຊີຍເມື່ອລູກໃຊ້ພາສາທີ່ເໝາະສົມ ໂດຍບໍ່ມີຄຳຫຍາບທີ່ລອກຮຽນແບບມາຈາກສື່ອອນລາຍ ພ້ອມທັງຫລຸດຜ່ອນການໃຊ້ສື່ອອນລາຍ ທີ່ມີເນື້ອໃນບໍ່ເໝາະສົມກັບອາຍຸຂອງເດັກນ້ອຍ ໂດຍສະເພາະຄວາມຮຸນແຮງ ແລະ ການໃຊ້ສັບພາສາ; ແນະນຳສື່ອອນລາຍ ຫລື ຜູ້ທີ່ມີອິດທິພົນ (ເນັດໄອດໍ້) ທີ່ໃຊ້ຄຳຖືກຕ້ອງເໝາະສົມ; ຕັກເຕືອນເມື່ອມີການໂພສຂໍ້ຄວາມດ້ວຍຄຳເວົ້າທີ່ຫຍາບຄາຍ ເມື່ອເດັກນ້ອຍໃຈຮ້າຍ ຫລື ບໍ່ພໍໃຈ ແລະ ອະທິບາຍໃຫ້ເດັກຮູ້ວ່າ ຂໍ້ຄວາມດັ່ງກ່າວຢູ່ໃນອອນລາຍ ອາດຈະມີຜົນກະທົບທາງລົບ ຕໍ່ກັບໂຕເຂົາເອງໃນອະນາຄົດ.

www.sanook.com

## ສາລາກະວີ

# ສີ່

# ໂດຍ: ຊອບ ທຳມະຊາດ

❋ ສັງຄົມພວມຍາກຫຍຸ້ງ
ໂລຄາມາວຽນວົນ
ຍ້ອນວ່າມານໂຕຮ້າຍ
ເສດຖະກິດບໍ່ເຕື້ອງ
ຖຸງຂອດການພັດທະນາ
ໝູ່ຄົນໂອຍຮ້ອງ
ໄວຣັດລາມແຜ່
ຕຶງເຕັ້ນແລ່ນຂະຫຍາຍ

❋ ຂໍໃຫ້ຊົນຊ່ວຍຊວ້ານ
ວານວິງສື່ມວນຊົນ
ເປັນຜູ້ຂານຈາແຈ້ງ
ທັງຂ່າວດີຂ່າວຮ້າຍ ນຳມາເຜີຍແຜ່ໃຫ້
ເສີມສິ່ງແນວທາງ
ດຸ່ງເດີນນຳໜ້າ
ເຍືອງແສງແທງຖືກທີ່
ປະຊາໄດ້ຮັບຊົມ

❋ ບ່ອນໃດຈົມແຈບພື້ນ
ຍັງບໍ່ທັນປັບປຸງ
ຕ້ອງໄດ້ຫາຂຸດຄຸ້ຍ
ເຄຣຍບັນຫາແຈ່ມແຈ້ງ
ຍັງມີຕື່ນໂຕຕາມ
ປ່ຽນແປງຕົນນັ້ນ
ລຸຍລົງຄວັດເຂ່ຍ
ປະຊາຮູ້ຊາບນຳ ນັ້ນແລ້ວ!

❋ ເຜີຍແຜ່ຂ່າວອອກນັ້ນ
ບໍ່ເຂົ້າຂ້າງອອກຂາ
ຊູເອົາຄວາມເປັນກາງຂຶ້ນ
ຄັນບໍ່ ມັນຊິຄືເພິ່ນເວົ້າ
ຢືນທ່ຽງເປັນກາງ
ວ່າຕາມນະໂຍບາຍເວົ້າ
ຕາມນາມຮຽກ "ສີ່"
ວ່າເຮົານັ້ນ "ຊື່ໆ" ເສີຍບໍ່ເປັນດາຍ

❋ ປະສານໃຈກອດກ້ຽວ
ເດີນໄປຕາມແນວທາງ
ບັນຫາດີຍໍຍ້ອງ
ອຳນາດເພິ່ນມອບໃຫ້
ເປັນ "ສີ່" ສັງຄົມເຫັນ
ພົກວາງລົງຊີ້
ມົວໝອງເຕືອນບອກ
ຈິ່ງນຳໃຊ້ໃຫ້ຖືກທາງ

❋ ສີ່ເອີຍ! ຝົນເຝົກໄວ້
ໃຫ້ມັນຄົມຍາມຂຽນ
ມວນຊົນລາວອາໄສເຈົ້າ
ເປັນກະບອກສຽງ "ສີ່" ໃຫ້
ປາຍປາກກາຕົນ
ປ່ຽນສັງຄົມຈະເລີນກ້າວ
ຈາຂານເຕືອນປ່າວ
ສັງຄົມໄດ້ຮັບຂໍ້ມູນ ຊອບແລ້ວ!

## ເບີໂທສຸກເສີນ

❑ ຕຳຫລວດ

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287



## ທັກທາຍ ລະບາຍ

# ສາວຈົ້ມ

**(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຖິ່ງພິທີການ)**

*❋ **ຊົມ**ເຊີຍວັນສື່ມວນຊົນແຫ່ງຊາດ **(13 ສິງຫາ 1950-13 ສິງຫາ 2022)** ຄົບຮອບ **72 ປີ** ຮຽມຮ່ວຍຍົກຍ້ອງຊົມຊື່ນຍິນດີ ເຈັດສິບສອງປີສື່ມວນຊົນ ຄູ່ຄຽງຂະຫຍາຍກ້າວ ປະເທດລາວພຸ່ງພົ້ນ ສາກົນເລັ່ງລ່າ ຍ້ອນວ່າສື່ຊ່ວຍຍູ້ ຊູໃຫ້ໂລກລື **ນັ້ນແລ້ວ!***

*❋ **ຊົມ**ເຊີຍວັນລັດຖະທຳມະນູນ ແຫ່ງ ສປປລາວ ທີ່ໝູນວຽນບັນຈົບຄົບຮອບ 31 ປີ **(15 ສິງຫາ 1991-15 ສິງຫາ 2022)** ຫລາຍພາກສ່ວນໄດ້ມີການກະກຽມກິດຈະກຳເພື່ອສະເຫລີມສະຫລອງຢ່າງຄຶກຄື້ນ ລັດຖະທຳມະນູນປະກາດໃຊ້ ເປັນແມ່ຂອງກົດໝາຍ ຊ່ວຍໃຫ້ສັງຄົມລາວ ໝັ້ນຄົງຈະເລີນກ້າວ ຍ້ອນລາວມີລັດຖະທຳມະນູນໃຊ້ ຄວາມສີວິໄລຈຶ່ງຄຽງຄູ່ ຊູຊາດລາວເອກອ້າງ ສາກົນຮູ້ທົ່ວເຖິງ **ຊອບແລ້ວ!***

*❋**ຊ່າວ**ການປ່ຽນຖ່າຍໄຟອຳນາດຈາກລະບົບໂຊລາເຊວ ເປັນລະບົບເອລີ ໃນສະຖານທີ່ **8 ຈຸດຄື ໄຟ**ອຳນາດ ໂພນສະອາດ, ຫໍປະຊຸມແຫ່ງຊາດ, ລາດຄວາຍ, ສີບຸນເຮືອງ, ຮ່ອງໄກ່ແກ້ວ, ສີດຳດວນ, ໂຮງກາຍະສິນ ແລະ ໄຟອຳນາດ ດົງປ່າແຫລບ ເຊິ່ງຜ່ານມາ ໄຟແດງຈຸດດັ່ງກ່າວ ນຳໃຊ້ລະບົບໂຊລາເຊວ (ພະລັງງານແສງອາທິດ) ເກີດມີຄວາມເປ່ເພ ໄຟບໍ່ສະຖຽນ ເຮັດໃຫ້ການສັນຈອນສັບສົນວົນວຸ່ນຄອນ ຈາກປີໄປພີ່ນ້ອງ ນັກຂັບຂີ່ທັງຫລາຍ ຄົງບໍ່ໝົກພະໄນ ເລື່ອງການສັນຈອນຍ້າຍ **ຂໍໃຫ້ຍືນຍາວໝັ້ນ** ໄຟແດງຈຸດທີ່ວ່າ ຢ່າໄດ້ມ່ລະບະມ້ອຍ ຄືກັ້ຜ່ານມາໃດເນີ!*

## ຊອບຍິ້ມ

# ແອ່ບຕຸ້ງ

**ເລື່ອງ: ການປຽບທຽບ**

ໃນຊົ່ວໂມງຮຽນວິຊາພູມສາດ ສາວຄູຖາມນັກຮຽນວ່າ ທະວີບອາເມລິກາ ກັບດວງຈັນ ແມ່ນຫຍັງໄກກວ່າກັນ? ທ້າວ ເອບ ຍົກມືຂຶ້ນແລ້ວຕອບວ່າ:

- ທະວີບອາເມລິກາໄກກວ່າ
- ເປັນຫຍັງຈຶ່ງວ່າແນວນັ້ນ?
- ເພາະວ່າເດືອນ ນ້ອງຫລຽວເຫັນເກືອບທຸກຄືນ ແຕ່ທະວີບອາເມລິກາ ບໍ່ເຄີຍເຫັນຈັກເທື່ອ
- ???



## ຄະຕິເຕືອນໃຈ

# ດອກຂະຍອມ

ວ່າໂຕກະດັກ ເພິ່ນແຮ່ງກະດ້
ວ່າໂຕຈ້າກ້ ເພິ່ນພັດບັ່ງຊື້ບຕໍ່

# ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 14 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

- ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ຕາມການແບ່ງງານ ແລະ ການມອບໝາຍ ຂອງລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

- ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຕິດຂັດ ຕາມການມອບໝາຍ ຂອງລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

- ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີສິດລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນທາງດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ.

**ມາດຕາ 15 ໂຄງປະກອບກົງຈັກຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ປະກອບດ້ວຍ ບັນດາກົມ, ອົງການລັດທຽບເທົ່າກົມ, ບັນດາພະແນກ ແລະ ຫົວໜ່ວຍວິຊາການ ຊຶ່ງກຳນົດໂດຍດຳລັດ ຂອງນາຍົກລັດຖະມົນຕີ.

- ການກຳນົດໂຄງປະກອບກົງຈັກ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໃຫ້ອີງໃສ່ຄວາມຮຽກ ຮ້ອງຕ້ອງການຕົວຈິງ ຂອງລັດຖະບານ ໃນແຕ່ລະໄລຍະ ຕາມການຕົກລົງຂອງນາຍົກລັດຖະມົນຕີ.

**ມາດຕາ 16 ໂຄງປະກອບບຸກຄະລາກອນ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

- ບຸກຄະລາກອນ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ປະກອບດ້ວຍ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫົວໜ້າ ແລະ ຮອງຫົວໜ້າ ກົມ, ຫົວໜ້າ ແລະ ຮອງຫົວໜ້າ ອົງການລັດທຽບເທົ່າກົມ, ຫົວໜ້າ ແລະ ຮອງຫົວໜ້າພະແນກ, ຫົວໜ່ວຍວິຊາການ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ.

## ໝວດທີ 5
## ກະຊວງ ແລະ ອົງການລັດທຽບເທົ່າກະຊວງ

**ມາດຕາ 17 ກະຊວງ ແລະ ອົງການລັດທຽບເທົ່າກະຊວງ**

ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ແມ່ນ ກົງຈັກຂອງລັດຖະບານ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກ ກ່ຽວກັບຂະແໜງການຂອງຕົນ ໃນຂອບເຂດທົ່ວປະເທດ.

**ມາດຕາ 18 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງ ແລະ ອົງການລັດທຽບເທົ່າກະຊວງ**

ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຮັບຜິດຊອບ ຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ໃນການບໍລິຫານຄຸ້ມຄອງລັດ ກ່ຽວກັບຂະແໜງການຂອງຕົນ ຊຶ່ງມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ຮ່າງນະໂຍບາຍ ແລະ ແຜນຍຸດທະສາດ ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ;

2. ຜັນຂະຫຍາຍ ແນວທາງ, ແຜນນະໂຍບາຍ, ແຜນການ, ມະຕິ ຂອງລັດຖະບານ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;

3. ກຳນົດແຜນການ ສ້າງ, ຝຶກອົບຮົມ, ບຳລຸງ ຍົກລະດັບພະນັກງານ-ລັດຖະກອນ ໃນຂອບເຂດທົ່ວປະເທດ ໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາປະເທດຊາດ ໃນແຕ່ລະໄລຍະ;

4. ກຳນົດ ການຈັດຕັ້ງ, ມາດຕະຖານ, ເງື່ອນໄຂ ການບັນຈຸ, ສັບຊ້ອນ ພະນັກງານ-ລັດຖະກອນ ໃນຂະແໜງການຂອງຕົນ ລວມທັງການຍ້ອງຍໍ, ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕາມກົດໝາຍ ແລະ ລະບຽບການ;

5. ຕິດຕາມ, ກວດກາ ການຈັດຕັ້ງ, ການບັນຈຸ, ສັບຊ້ອນ ພະນັກງານ-ລັດຖະກອນ ໃນຂະແໜງ ການຂອງຕົນ;

6. ຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ເຜີຍແຜ່ ແລະ ແນະນຳການນຳໃຊ້ວິທະຍາສາດ, ເຕັກໂນໂລຊີໃໝ່ເຂົ້າໃນການພັດທະນາຂະແໜງການຂອງຕົນ;

7. ສະເໜີ ປັບປຸງ ຫຼື ສ້າງ ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດ ຕໍ່ລັດຖະບານ;

8. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ໜັງສືທາງລັດຖະການ;

9. ຊີ້ນຳ ແລະ ຄຸ້ມຄອງ ຕາມສາຍຕັ້ງ ທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ສິດຕົກລົງບັນຫາ ໃຫ້ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງຢ່າງລະອຽດ;

10. ພົວພັນ, ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການຕົກລົງຂອງລັດຖະບານ;

11. ສະຫຼຸບ ສັງລວມ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດວຽກງານ ຕໍ່ ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການຕົກລົງຂອງລັດຖະບານ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ**

ລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ ແມ່ນສະມາຊິກລັດຖະບານ ເປັນຫົວໜ້າກະຊວງ ແລະ ອົງການລັດທຽບເທົ່າກະຊວງ ຮັບຜິດຊອບ ຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ໃນການຄຸ້ມຄອງມະຫາພາກ ຕາມຂະແໜງການທີ່ຕົນຮັບຜິດຊອບ ຊຶ່ງມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍແລະຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ, ປະຈຳປີ ຂອງລັດຖະ ບານ ແລະ ມະຕິຂອງກອງປະຊຸມລັດຖະບານ;

2. ຊີ້ນຳ, ຄຸ້ມຄອງ, ກວດກາ ແລະ ວາງມາດຕະການອັນຈຳເປັນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ມະຕິ ຂອງກອງປະຊຸມສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດ, ຂອງລັດຖະບານ, ແຜນການ ແລະ ການເຄື່ອນໄຫວວຽກງານຂອງຕົນ;

3. ສະເໜີ ສ້າງ ຫຼື ປັບປຸງ ກົດໝາຍ, ລັດຖະບັນຍັດ, ລັດຖະດຳລັດ ແລະ ດຳລັດ ຕໍ່ລັດຖະບານ;

4. ຊີ້ນຳ ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການເຜີຍແຜ່ ແລະ ແນະນຳ ກ່ຽວກັບການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີໃໝ່ ເຂົ້າໃນການພັດທະນາຂະແໜງການຂອງຕົນ;

5. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງວຽກງານ;

6. ໂຈະ, ຍົກເລີກ ຫຼື ລົບລ້າງ ນິຕິກຳ ຂອງອົງການຈັດຕັ້ງຂັ້ນລຸ່ມ ຂອງຕົນ ທີ່ຂັດກັບກົດໝາຍ ຫຼື ລະບຽບການ;

7. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຫຼື ສະເໜີຂັ້ນເທິງ ພິຈາລະນາໂຈະ, ຍົກເລີກ ຫຼື ລົບລ້າງນິຕິກຳ ຂອງຂະແໜງການອື່ນ ທີ່ຂັດກັບກົດໝາຍ ຫຼື ລະບຽບການ;

8. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າ, ຮອງຫົວໜ້າພະແນກ, ຫົວໜ້າ, ຮອງຫົວໜ້າ ຂະແໜງ, ຫົວໜ້າ, ຮອງຫົວໜ້າໜ່ວຍງານວິຊາການ; ບັນຈຸ, ສັບຊ້ອນ ພະນັກງານ-ລັດຖະກອນ ພາຍໃນກະຊວງ, ອົງການລັດທຽບເທົ່າກະຊວງ;

9. ມີຄຳເຫັນຕໍ່ການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າພະແນກ ຂັ້ນແຂວງ;

10. ໃຫ້ການບໍລິການຮັບໃຊ້ປະຊາຊົນ, ຮັບຟັງຄຳຄິດຄຳເຫັນ, ຄຳຮ້ອງ, ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບບັນຫາທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອຄົ້ນຄວ້າ, ແກ້ໄຂ ຫຼື ສະເໜີໃຫ້ຂັ້ນເທິງ ຫຼື ພາກສ່ວນອື່ນ ພິຈາລະນາ ຕາມກົດໝາຍ ແລະ ລະບຽບການ;

11. ພົວພັນ, ຮ່ວມມື, ເຈລະຈາ, ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກຊ່ວຍຈຳ ກັບຕ່າງປະເທດ,ພາກພື້ນ ແລະ ສາກົນ ຕາມການມອບໝາຍຂອງລັດຖະບານ;

12. ສະຫຼຸບ ສັງລວມ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດວຽກງານ ຕໍ່ລັດຖະບານ, ນາຍົກລັດຖະ ມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ;

13. ລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນທາງດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ການຕົກລົງຂອງລັດຖະບານ.

**ມາດຕາ 20 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງລັດຖະມົນຕີ ແລະ ຮອງຫົວໜ້າອົງການລັດທຽບເທົ່າກະຊວງ**

- ຮອງລັດຖະມົນຕີ ແລະ ຮອງຫົວໜ້າອົງການລັດທຽບເທົ່າກະຊວງ ມີ ສິດ ແລະ ໜ້າທີ່ ຊ່ວຍລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ ໃນການຊີ້ນຳວຽກງານຂອງຂະແໜງການຕົນ, ຮັບຜິດຊອບວຽກງານຕາມການແບ່ງງານ ແລະ ການມອບໝາຍ ຂອງລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ.

- ຮອງລັດຖະມົນຕີແລະຮອງຫົວໜ້າອົງການລັດທຽບເທົ່າກະຊວງທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີ ຫຼື ຫົວໜ້າອົງການລັດທຽບເທົ່າກະຊວງ ຕິດຂັດ ຕາມການມອບໝາຍ ຂອງລັດຖະມົນຕີ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ.

- ຮອງລັດຖະມົນຕີ ແລະ ຮອງຫົວໜ້າອົງການລັດທຽບເທົ່າກະຊວງ ມີສິດລາອອກຈາກຕຳແໜ່ງ ເມື່ອເຫັນວ່າຕົນ ບໍ່ສາມາດປະຕິບັດໜ້າທີ່ໄດ້ຍ້ອນເຫດຜົນທາງດ້ານສຸຂະພາບ ຫຼື ດ້ວຍເຫດຜົນອື່ນ.

**ມາດຕາ 21 (ປັບປຸງ) ໂຄງປະກອບກົງຈັກ ຂອງ ກະຊວງ ແລະ ອົງການລັດທຽບເທົ່າກະຊວງ**

ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ປະກອບດ້ວຍ ຫ້ອງການກະຊວງ, ຫ້ອງການອົງການລັດທຽບເທົ່າກະຊວງ, ບັນດາກົມ, ອົງການລັດທຽບເທົ່າກົມ, ສະຖາບັນ, ບັນດາພະແນກ, ຂະແໜງ ແລະ ຫົວໜ່ວຍວິຊາການ ຊຶ່ງກຳນົດໂດຍດຳລັດ ຂອງນາຍົກລັດຖະມົນຕີ.

**ມາດຕາ 22 (ປັບປຸງ) ໂຄງປະກອບບຸກຄະລາກອນ ຂອງ ກະຊວງ ແລະ ອົງການລັດທຽບເທົ່າກະຊວງ**

- ບຸກຄະລາກອນ ຂອງກະຊວງ ແລະ ອົງການລັດທຽບເທົ່າກະຊວງ ປະກອບດ້ວຍ ລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ, ຫົວໜ້າ, ຮອງຫົວໜ້າຫ້ອງການ, ຫົວໜ້າ, ຮອງຫົວໜ້າກົມ, ຫົວໜ້າ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າ, ຮອງຫົວໜ້າສະຖາບັນ, ຫົວໜ້າ, ຮອງຫົວໜ້າພະແນກ, ຫົວໜ້າ

ອ່ານຕໍ່ສະບັບໜ້າ...




## ໜັງໜ້າໄຟ

ໂດຍ: ດົ້ນກົບເມກ

ຄົນລາວຄຸ້ນເຄີຍກັບການກິນດັ່ງຄຳເວົ້າທີ່ວ່າກິນຫອຍເຂົ້າຍັງ-ກິນໜັງເຂົ້າຫມົດ, ທຳມະດາໜັງເຄັມ (ໜັງຄວາຍ) ທີ່ຄົນລາວເຮັດເປັນອາຫານໄວ້ກິນໄດ້ຍາວນານ ເພາະຢາກຍາມໃດກໍເອົາມາຈີ່, ຕຳແຈວປັ້ນກັບເຂົ້າໜຽວໜຶ້ງໃໝ່ຮ້ອນໆ ຖືວ່າເປັນເມນູອາຫານຄົນລາວນິຍົມກິນ ແຕ່ການຈີ່ໜັງ ຖ້າວ່າຄົນເຮົາສັງເກດຈະເຫັນວ່າ ສ່ວນທີ່ມັນຫົດເຂົ້າບໍ່ຖືກໄຟ ເຮົາຕ້ອງຫາວິທີຈີ່ໃຫ້ມັນຖືກໄຟ...

ໜັງໜ້າໄຟຈຶ່ງອາດຮ້ອນ ຫລືໄໝ້ໄວກວ່າສ່ວນທີ່ເປັນໜັງຫົດງໍຢູ່ໃນ ເຊິ່ງຄືງບໍ່ຕ່າງກັບໜັງກອງເພນທີ່ຖືກໄມ້ຕີກອງຂອງຈີວນ້ອຍຟາດເອົາທຸກວັນສິບຈິນໜັງທີ່ເປັນສ່ວນໜ້າກອງບອບບາງ ແລະ ແຕກຂາດເປັນສ່ວນໃຫຍ່ ແຕ່ສ່ວນໜັງທີ່ຍັງມີສະພາບດີກໍແມ່ນສ່ວນທີ່ຫຸ້ມເລີຍໜ້າກອງເຂົ້າມາຫາລຳໂຕກອງ.

ໜັງໜ້າໄຟເປັນຄຳປຽບທຽບໃສ່ພຶດຕິກຳຂອງມະນຸດທີ່ຍອມໃຫ້ເຂົາໃຊ້ອອກໜ້າສະແດງແທນເມື່ອມີສິ່ງໃດເກີດຂຶ້ນກໍຈະໄດ້ຮັບຜົນກະທົບຢູ່ເລື້ອຍໆ ແລະ ຖືກກະທົບກ່ອນໝູ່ ເຖິງແມ່ນວ່າຖືກສັງຄົມນຳມາວິພາກວິຈານກໍຕ້ອງໄດ້ຍອມເພາະບົດບາດສະແດງມັນຕ່າງກັນ ເຊິ່ງຜູ້ທີ່ຢູ່ຫລັງສາກ ຫລື ທີ່ມືດ ຫລືວ່າ ພາສາເສດຖະສາດ ເອີ້ນວ່າ: ມືທີ່ມອງບໍ່ເຫັນກໍຈະຫລິ້ນບົດບາດຊັກໃຍຫລົບຊ້ອນຢູ່ໄດ້ຢ່າງສະບາຍ ປະໃຫ້ຜູ້ເຮັດບົດບາດໜັງໜ້າໄຟ ຫລື ໜັງໜ້າກອງສະແດງແທນ.....

ຄຳເວົ້າຂອງຄົນບູຮານທີ່ຜູ້ຂຽນຍົກມາອະທິບາຍນັ້ນ ອາດຖືກກັບພຶດຕິກຳຂອງຄົນໃນສັງຄົມທີ່ມີບົດບາດສະແດງແຕກຕ່າງກັນໄປ ເພາະຢ່າລືມວ່າຜູ້ທີ່ເປັນໜັງໜ້າໄຟ ຕ່າງກໍເຮັດເພື່ອຜົນປະໂຫຍດ ເຊິ່ງຖ້າໃຜເບິ່ງບໍ່ຊອດຮອດຂ້າງໃນກໍຈະຫລຽວເຫັນແຕ່ໜັງໜ້າໄຟທີ່ຖືກສົມມຸດໃຫ້ເຮັດບົດບາດນັ້ນ.




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄຳ ພິພັດເສລີ**

13. ການສືບສວນ-ສອບສວນ ໝາຍເຖິງ ການຊອກຫາ ແລະ ການເກັບກຳຂໍ້ມູນ, ຫລັກຖານ;

14. ຈຳເລີຍ ໝາຍເຖິງ ຜູ້ຖືກສັ່ງຟ້ອງຂຶ້ນສານ;

# ສຳເລັດກອງປະຊຸມລັດຖະມົນຕີການຕ່າງປະເທດອາຊຽນ

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**




ຕາມການລາຍງານຂ່າວໃຫ້ຮູ້ວ່າ: ກອງປະຊຸມລັດຖະມົນຕີການຕ່າງປະເທດອາຊຽນ ຄັ້ງທີ 55 ແລະ ກອງປະຊຸມປີ່ນອ້ອມຕ່າງໆທີ່ຈັດຂຶ້ນຢູ່ນະຄອນຫລວງພະນົມເປັນ ປະເທດກຳປູເຈຍ ໄດ້ອັດລົງຢ່າງຈົບງາມໃນວັນທີ 6 ສິງຫານີ້ ກອງປະຊຸມໄດ້ຜ່ານຮັບຮອງເອກະສານກ່ຽວກັບການຮ່ວມມືພາກພື້ນປະມານ 30 ສະບັບ.

ກຳປູເຈຍແມ່ນປະເທດປະທານໝູນວຽນຂອງອາຊຽນ ປະຈຳປີ 2022 ທ່ານ ປຣັກ ໂຊຄຸນ ຮອງນາຍົກລັດຖະມົນຕີ ທັງເປັນລັດຖະມົນຕີກະຊວງການຕ່າງປະເທດກຳປູເຈຍໄດ້ກ່າວໃນກອງປະຊຸມຖະແຫລງຂ່າວພາຍຫລັງກອງປະຊຸມສິ້ນສຸດລົງວ່າ: ລັດຖະມົນຕີການຕ່າງປະເທດຂອງບັນດາປະເທດສະມາຊິກອາຊຽນໄດ້ທົບທວນຄືນຄວາມຄືບໜ້າທີ່ໄດ້ຮັບນັບມາຮອດປັດຈຸບັນໃນດ້ານການເພີ່ມທະວີການສ້າງປະຊາຄົມອາຊຽນ ການຊຸກຍູ້ການເຊື່ອມໂຍງພາກພື້ນ ພ້ອມທັງການເພີ່ມທະວີການຮ່ວມມື ລະຫວ່າງອາຊຽນກັບຄູ່ຮ່ວມມືພາຍນອກ.

ລັດຖະມົນຕີການຕ່າງປະເທດອາຊຽນ ຍັງໄດ້ຢືນຢັນວ່າ: ຈະສຸມໃສ່ການຮັບປະກັນການປະຕິບັດສັນຍາກ່ຽວກັບສາຍພົວພັນຄູ່ຮ່ວມເສດຖະກິດຮອບດ້ານໃນພາກພື້ນ ຫລື ເພື່ອຍົກສູງແຮງດຶງດູດຂອງອາຊຽນຕໍ່ການຄ້າ, ການລົງທຶນ ແລະ ຕ່ອງໂສ້ການສະໜອງຂອງໂລກ

ກອງປະຊຸມລັດຖະມົນຕີການຕ່າງປະເທດອາຊຽນ ຄັ້ງທີ 55 ແລະ ກອງປະຊຸມປີ່ນອ້ອມຕ່າງໆ ໄດ້ຈັດຂຶ້ນທີ່ປະເທດກຳປູເຈຍ ລະຫວ່າງວັນທີ 30 ກໍລະກົດ-6 ສິງຫາ 2022 ໂດຍລັດຖະມົນຕການຕ່າງປະເທດ ແລະ ຜູ້ຕາງໜ້າຈາກ 38 ປະເທດ ໄດ້ເຂົ້າຮ່ວມກອງປະຊຸມ ໄດ້ຜ່ານຮັບຮອງ ແລະ ອະນຸມັດເອກະສານກ່ຽວກັບການຮ່ວມມືພາກພື້ນປະມານ 3 ສະບັບ ເຊິ່ງພົວພັນເຖິງຂົງເຂດການເມືອງ, ຄວາມໝັ້ນຄົງ, ເສດຖະກິດ-ສັງຄົມແລະ ວັດທະນະທຳເປັນຕົ້ນ.

**ແຫລ່ງຂ່າວ: ASEAN.org**

ທະນາຄານພັດທະນາລາວ
LDB Bank

ທະນາຄານພົງສະຫວັນ
Phongsavanh BANK




# ເວທີປຶກສາຫາລືລະຫວ່າງສື່ມວນຊົນ ແລະ ຄັງປັນຍາຈີນ-ອາຊຽນ 2022

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**

ອີງຕາມການລາຍງານຂ່າວໃນວັນທີ 7 ສິງຫາ 2022 ໃຫ້ຮູ້ວ່າ: ກອງປະຊຸມເວທີປຶກສາຫາລື ລະຫວ່າງສື່ມວນຊົນ ແລະ ຄັງປັນຍາຈີນ-ອາຊຽນ ປະຈຳປີ 2022 ໄດ້ຈັດຂຶ້ນຢູ່ນະຄອນຫລວງປັກກິ່ງ ປະເທດຈີນ ພາຍໃຕ້ຫົວຂໍ້: "ການພັດທະນາຂອງທົ່ວໂລກຮ່ວມຊາຕາກຳປະສານງານການເຄື່ອນໄຫວ" ເຊິ່ງມີບັນດາເຈົ້າໜ້າທີ່ຜູ້ຮັບຜິດຊອບສື່ມວນຊົນຫລັກ, ຜູ້ຕາງໜ້າຄັງປັນຍາ ແລະ ຜູ້ຊ່ຽວຊານ, ນັກວິຊາການຈາກຈີນ ແລະ 10 ປະເທດອາຊຽນເຂົ້າຮ່ວມກອງປະຊຸມດ້ວຍຮູບແບບອອນໄລ ແລະ ອັອບໄລ ທັງນີ້, ກໍເພື່ອດຳເນີນການແລກປ່ຽນກັນ ໂດຍປິ່ນປ້ອມການຊຸກຍູ້ການຈັດຕັ້ງປະຕິບັດຂໍ້ລິເລີ່ມກ່ຽວກັບການພັດທະນາຂອງທົ່ວໂລກ, ການຊຸກຍູ້ສາຍພົວພັນຄູ່ຮ່ວມຍຸດທະສາດຮອບດ້ານຈີນ-ອາຊຽນ ແລະ ອື່ນໆ.

ນັບຕັ້ງແຕ່ປະເທດຈີນໄດ້ສະເໜີອອກຂໍ້ລິເລີ່ມກ່ຽວກັບການພັດທະນາຂອງທົ່ວໂລກເມື່ອເດືອນກັນຍາປີ 2021 ເປັນຕົ້ນມາ ຂໍ້ລິເລີ່ມດັ່ງກ່າວ ໄດ້ຮັບການຕອບຮັບ ແລະ ການສະໜັບສະໜູນຢ່າງຕັ້ງໜ້າຈາກປະຊາຄົມໂລກ ໃນກອງປະຊຸມເວທີປຶກສາຫາລືຄັ້ງນີ້ ທ່ານ ນາງ ຄຳເຜົາ ເອີນທະວັນ ເອກອັກຄະລັດຖະທູດ ສປປລາວປະຈຳ ສປຈີນ ໄດ້ມີຄຳເຫັນວ່າ: ສອງຝ່າຍລາວ-ຈີນສາມາດເພີ່ມທະວີການເຊື່ອມໂຍງລະຫວ່າງຂໍ້ລິເລີ່ມກ່ຽວກັບການພັດທະນາຂອງທົ່ວໂລກ ແລະ ວິໄສທັດຂອງປະຊາຄົມອາຊຽນ 2025 ດຳເນີນການຮ່ວມມືໃຫ້ຫລາຍກວ່າເກົ່າໃນດ້ານລຶບລ້າງຄວາມທຸກຍາກ, ການສ້າງພື້ນຖານໂຄງລ່າງ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຊັບພະຍາກອນ ແລະ ດ້ານອື່ນໆ.

ທ່ານ ເສີນເຕົາໄທ ເລຂາທິການສູນຈີນ-ອາຊຽນ ໄດ້ກ່າວວ່າ: ສື່ມວນຊົນຈີນ ແລະ ອາຊຽນ ຄວນສຸມໃສ່ການປ້ອງກັນ ແລະ ຕ້ານການແຜ່ລະບາດຂອງພະຍາດໂຄວິດ-19 ການຟື້ນຟູດ້ານເສດຖະກິດ ແລະ ຫົວຂໍ້ອື່ນໆ ເລົ່າເລື່ອງລາວກ່ຽວກັບການພັດທະນາຂອງຈີນ-ອາຊຽນໃຫ້ດີ ເພື່ອສ້າງສະພາບແວດລ້ອມດ້ານທາງສຽງທີ່ດີໃຫ້ແກ່ການລົງເລິກການຮ່ວມມືລະຫວ່າງສອງຝ່າຍ.

ບັນດາຜູ້ເຂົ້າຮ່ວມກອງປະຊຸມ ໄດ້ຕີລາຄາໃນສູງຕໍ່ບົດບາດສຳຄັນທີ່ເປັນ "ເຄື່ອງຮັກສາຄວາມໝັ້ນທ່ຽງ" ຂອງຂໍ້ລິເລີ່ມກ່ຽວກັບການພັດທະນາຂອງທົ່ວໂລກໃນການຊຸກຍູ້ການຮ່ວມມືດ້ານການພັດທະນາສາກົນ ແລະ ເພື່ອສັນຕິພາບ ແລະ ການພັດທະນາ ເປັນຕົ້ນມີຄຳເຫັນວ່າ: ຕ້ອງໄປຕາມຄວາມຄອງຄອຍທົ່ວໄປຂອງບັນດາປະເທດໃນພາກພື້ນທີ່ສະແຫວງຫາສັນຕິພາບ, ສະແຫວງຫາສະຖຽນລະພາບ, ຊຸກຍູ້ການພັດທະນາ, ສະແຫວງຫາຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດໄດ້ສິ່ງສຽງຮ່ວມກັນທີ່ຮ່ວມກັນຮັບມືກັບປັດໄຈຫຍໍ້ທໍ້ທີ່ເປັນໄພຂົ່ມຂູ່ຕໍ່ສັນຕິພາບ ແລະ ການພັດທະນາ, ປົກປັກຮັກສາ ແລະ ສ້າງບ້ານທີ່ສວຍງາມໃຫ້ດີ.

**ແຫລ່ງຂ່າວ: CRI**







| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສົງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພົດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ສຸພາວັນ ທອມສະນິດ<br>ທ່ານ ນາງ ປາກາລັກ ພົມມີໄຊ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |